ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ ເລກທີ 49/ພນ

ນະຄອນຫຼວງວຽງຈັນ, ວັນທີ 01 ກຸມພາ 2023

# ຂໍ້ຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບເລກທີ 575/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ໜັງສືສະເໜີຂອງກົມການປົກຄອງທ້ອງຖິ່ນ ສະບັບເລກທີ 07/ປທ, ລົງວັນທີ 12 ມັງກອນ 2023.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດກ່ຽວກັບ ຫຼັກການ, ໜ່ວຍງານຊ່ວຍວຽກບ້ານ, ການເລືອກຕັ້ງຄະນະອົງການປົກຄອງບ້ານ, ການແຕ່ງຕັ້ງນາຍບ້ານ, ການພົ້ນຈາກຕຳແໜ່ງ, ການເງິນບ້ານ ແລະ ລະບອບແບບແຜນວິທີເຮັດວຽກ ແນໃສ່ເປັນບ່ອນອີງໃນການປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການປົກຄອງບ້ານ ໃນການສ້າງບ້ານໃຫ້ເປັນຫົວໜ່ວຍພັດທະນາ.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບ້ານໃນຂອບເຂດທົ່ວປະເທດ.

**ມາດຕາ 3 ຫຼັກການ**

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານປະຕິບັດຕາມຫຼັກການ:

1. ລວມສູນປະຊາທິປະໄຕ, ປຶກສາຫາລືເປັນໝູ່ຄະນະ, ສຽງສ່ວນໜ້ອຍປະຕິບັດຕາມສຽງສ່ວນຫຼາຍ, ບຸກຄົນຂຶ້ນກັບການຈັດຕັ້ງ ແລະ ມີການແບ່ງງານໃຫ້ບຸກຄົນຮັບຜິດຊອບ;
2. ຮັບປະກັນສະຖຽນລະພາບຂອງການຈັດຕັ້ງ, ລັກສະນະຕໍ່ເນື່ອງ ແລະ ຂະຫຍາຍຕົວຂອງວຽກງານ;
3. ປະສານສົມທົບ, ເຄື່ອນໄຫວວຽກງານຢ່າງໂປ່ງໃສ, ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບ.

## ໝວດທີ 2
## ໜ່ວຍງານຊ່ວຍວຽກບ້ານ

**ມາດຕາ 4 ໜ່ວຍງານຊ່ວຍວຽກບ້ານ**

ໜ່ວຍງານຊ່ວຍວຽກບ້ານແມ່ນໜ່ວຍງານໜຶ່ງ ທີ່ໄດ້ຮັບການຈັດຕັ້ງຂຶ້ນຕາມຈຳນວນໜ້າວຽກຕົວຈິງ ເພື່ອຊ່ວຍວຽກບ້ານ ໂດຍແບ່ງອອກເປັນກຸ່ມວຽກໃນແຕ່ລະຂົງເຂດວຽກງານ.

**ມາດຕາ 5 ທີ່ຕັ້ງ ແລະ ພາລະບົດບາດ**

ໜ່ວຍງານຊ່ວຍວຽກບ້ານແມ່ນໂຄງປະກອບກົງຈັກຂອງອົງການປົກຄອງບ້ານ ມີພາລະບົດບາດຊ່ວຍວຽກອົງການປົກຄອງບ້ານ ໃນການຄຸ້ມຄອງບໍລິຫານວຽກງານຮອບດ້ານຂອງບ້ານ ຄື: ວຽກງານບໍລິຫານ-ການປົກຄອງ, ວຽກງານພັກ-ອົງການຈັດຕັ້ງມະຫາຊົນ, ວຽກງານເສດຖະກິດ-ການເງິນ, ວຽກງານວັດທະນະທຳ-ສັງຄົມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 6 ຈຳນວນໜ່ວຍງານຊ່ວຍວຽກບ້ານ**

ຈຳນວນໜ່ວຍງານຊ່ວຍວຽກບ້ານປະກອບມີ ສາມ ຫາ ຫ້າ ໜ່ວຍງານ ໂດຍອີງຕາມຈຳນວນພົນລະເມືອງ, ສະພາບຈຸດພິເສດຂອງບ້ານ ແລະ ຕາມກຸ່ມວຽກ ຄື: ກຸ່ມວຽກບໍລິຫານ-ການປົກຄອງ, ກຸ່ມວຽກພັກ-ອົງການຈັດຕັ້ງມະຫາຊົນ, ກຸ່ມວຽກເສດຖະກິດ-ການເງິນ, ກຸ່ມວຽກວັດທະນະທຳ-ສັງຄົມ ແລະ ກຸ່ມວຽກປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ກໍລະນີຈັດຕັ້ງມີສາມ ຫຼື ສີ່ໜ່ວຍງານ ຫ້ອງການພາຍໃນຕ້ອງເປັນເຈົ້າການສົມທົບກັບອົງການປົກຄອງບ້ານຈັດຕັ້ງສັບຊ້ອນໃຫ້ສອດຄ່ອງກັບສະພາບຕົວຈິງ.

**ມາດຕາ 7 ພະນັກງານຊ່ວຍວຽກບ້ານ**

ໃນແຕ່ລະໜ່ວຍງານຊ່ວຍວຽກຂອງອົງການປົກຄອງບ້ານໃຫ້ປະກອບມີ: ພະນັກງານຊ່ວຍວຽກ ໜຶ່ງ ຫາ ສາມຄົນ ໂດຍອີງໃສ່ຈຳນວນພົນລະເມືອງ ຫຼື ຄວາມຈຳເປັນຂອງໜ້າວຽກຕົວຈິງຂອງບ້ານ, ໃນນັ້ນ ນາຍບ້ານ ແລະ ຮອງນາຍບ້ານ ຕ້ອງເປັນຫົວໜ້າໜ່ວຍງານ.

**ມາດຕາ 8 ໜ້າທີ່ຄວາມຮັບຜິດຊອບຂອງໜ່ວຍງານຊ່ວຍວຽກບ້ານ**

**1. ວຽກງານບໍລິຫານ-ການປົກຄອງ**

1.1. ຮັບຜິດຊອບວຽກຂາເຂົ້າ-ຂາອອກ; ຄຸ້ມຄອງຕາປະທັບຂອງນາຍບ້ານ, ເກັບມ້ຽນ ແລະ ປົກປັກຮັກສາເອກະສານ;

1.2. ສັງລວມສະຖິຕິຮອບດ້ານ, ແຜນພັດທະນາບ້ານ, ກະກຽມ ແລະ ບັນທຶກກອງປະຊຸມຕ່າງໆຂອງບ້ານ;

1.3. ຄົ້ນຄວ້າບັນດານິຕິກຳ, ຄຳສັ່ງ, ບົດແນະນຳຕ່າງໆຂອງພັກ-ລັດ ເພື່ອຫັນເປັນແຜນການ, ວິທີການຈັດຕັ້ງປະຕິບັດ;

1.4. ຄົ້ນຄວ້າສ້າງກົດລະບຽບຂອງບ້ານ, ຊ່ວຍວຽກເອກະສານຂອງນາຍບ້ານ;

1.5. ໃຫ້ຄວາມຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ໃນການເຮັດວຽກຄຸ້ມຄອງພົນລະເມືອງ; ຮັບ ແລະ ຄົ້ນຄວ້ານຳສະເໜີແກ້ໄຂຄຳສະເໜີ, ຄຳຮ້ອງຂອງປະຊາຊົນຕາມຂອບເຂດສິດຂອງຕົນ;

1.6. ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງນາຍບ້ານ, ປະສານງານກັບອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ;

1.7. ຊ່ວຍນາຍບ້ານໃນການຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ-ພະນັກງານ ແລະ ເຮັດວຽກງານແຂ່ງຂັນ-ຍ້ອງຍໍຂອງບ້ານ;

1.8. ສະຫຼຸບ, ລາຍງານການຈັດຕັ້ງການເຄື່ອນໄຫວວຽກງານຂອງບ້ານ;

1.9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**2. ວຽກງານພັກ-ອົງການຈັດຕັ້ງມະຫາຊົນ**

2.1. ຊ່ວຍຕິດຕາມ, ກວດກາ ແລະ ຊຸກຍູ້ ການປະຕິບັດມະຕິ ຂອງການຈັດຕັ້ງຮາກຖານພັກ, ການເຄື່ອນໄຫວວຽກງານຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂອງບ້ານ;

2.2. ຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານໃນການຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງຂອງ ພັກ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂອງບ້ານ;

2.3. ຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານໃນການເກັບກຳຂໍ້ມູນ, ສະຫຼຸບສັງລວມສະພາບການເຄື່ອນໄຫວນຳພາຮອບດ້ານຂອງໜ່ວຍພັກບ້ານ, ຄະນະພັກຮາກຖານ, ກະກຽມປະຊຸມຮ່ວມຊີວິດໜ່ວຍພັກບ້ານ ປະຈຳເດືອນ, ສາມເດືອນ, ຫົກເດືອນ, ປະຈຳປີ ແລະ ກະກຽມດຳເນີນກອງປະຊຸມໃຫຍ່ຮາກຖານພັກ;

2.4. ຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານ ສ້າງແຜນການ ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ພ້ອມທັງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຕິດຕາມ, ກວດກາ, ຊຸກຍູ້ ການປະຕິບັດຂໍ້ແຂ່ງຂັນ ແລະ ວຽກງານຍ້ອງຍໍຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຢູ່ຂັ້ນບ້ານ;

2.5. ຄົ້ນຄວ້າຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານ ໃນການຮ່າງມະຕິ, ຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ, ໜັງສືທາງລັດຖະການກ່ຽວກັບວຽກງານຈັດຕັ້ງ, ວຽກງານພັກ-ພະນັກງານ, ວຽກງານແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;

2.6. ຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານ ໃນການຄຸ້ມຄອງ, ກຳແໜ້ນທາງດ້ານຈຳນວນ, ຄຸນນະພາບຂອງຖັນແຖວສະມາຊິກພັກ, ພະນັກງານ ແລະ ການຈັດຕັ້ງໃນລະບົບການເມືອງຢູ່ຂັ້ນບ້ານ;

2.7. ສະຫຼຸບ, ລາຍງານການຈັດຕັ້ງການເຄື່ອນໄຫວວຽກງານຂອງໜ່ວຍງານຕົນ;

2.8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງໜ່ວຍພັກບ້ານ, ຄະນະພັກຮາກຖານ ແລະ ອົງການປົກຄອງບ້ານທີ່ພົວພັນເຖິງຄວາມຮັບຜິດຊອບຂອງຕົນ.

**3. ວຽກງານເສດຖະກິດ-ການເງິນ**

3.1. ຈັດສັນບ່ອນທຳມາຫາກິນ, ຮັບຜິດຊອບກິດຈະການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຄຸ້ມຄອງກອງທຶນພັດທະນາບ້ານ;

3.2. ປຸກລະດົມ, ຊຸກຍູ້ວຽກງານກະສິກຳ-ປ່າໄມ້: ປູກພືດຜັກ, ປູກຕົ້ນໄມ້ກິນໝາກ, ໄມ້ອຸດສາຫະ ກຳ, ປູກປ່າ; ການລ້ຽງສັດທີ່ເປັນມູນເຊື້ອ; ປົກປັກຮັກສາປ່າໄມ້, ປ່າສະຫງວນ, ປ່າໄມ້ທີ່ເປັນຕົ້ນແຫຼ່ງນ້ຳລຳເຊ, ສະພາບສິ່ງແວດລ້ອມຂອງບ້ານ;

3.3. ຮັບຜິດຊອບຕິດຕາມ ແລະ ແຈ້ງເຫດການລະບາດພະຍາດສັດ, ໄພທຳມະຊາດໃນຂອບເຂດບ້ານຕົນ;

3.4. ປຸກລະດົມ, ຊຸກຍູ້ ແລະ ຄຸ້ມຄອງວຽກງານຫັດຖະກຳ: ຈັກສານ, ຕຳແຜ່ນ, ໂຮງຊ່າງຫັດຖະກຳຕ່າງໆ ທີ່ເປັນມູນເຊື້ອຂອງບ້ານ; ການຈັດຕັ້ງຫົວໜ່ວຍເສດຖະກິດຕ່າງໆຂອງບ້ານ ເຊັ່ນ: ຫ້າງຮ້ານ, ຫົວໜ່ວຍການຄ້າ, ການບໍລິການ, ການຜະລິດທຸລະກິດ...;

3.5. ປຸກລະດົມ, ຊຸກຍູ້ປະຊາຊົນສ້າງ ແລະ ບູລະນະເສັ້ນທາງ, ຮ່ອງລະບາຍນ້ຳ, ຝາຍກັ້ນນ້ຳ, ຄອງເໝືອງ ແລະ ພື້ນຖານໂຄງລ່າງອື່ນໆ ຂອງບ້ານ;

3.6. ເກັບກໍາ ແລະ ຄຸ້ມຄອງ ສະຖິຕິດ້ານເສດຖະກິດຂອງບ້ານເຊັ່ນ: ເນື້ອທີ່ຕອນດິນ, ຜົນໄດ້ຮັບທາງດ້ານການຜະລິດກະສິກໍາ, ຫັດຖະກໍາ ແລະ ຫົວໜ່ວຍເສດຖະກິດຕ່າງໆທີ່ມີຢູ່ໃນບ້ານ ແລະ ຂໍ້ມູນມາດຕະຖານຄວາມທຸກຍາກ, ມາດຕະຖານພັດທະນາຂອງບ້ານ;

3.7. ຄຸ້ມຄອງວຽກງານການເງິນຂອງບ້ານ, ເງິນຮັບໃຊ້ບໍລິຫານອົງການປົກຄອງບ້ານ ແລະ ເງິນປະກອບສ່ວນຂອງປະຊາຊົນເຂົ້າໃນກິດຈະການ ຫຼື ວຽກງານລວມຕ່າງໆຂອງບ້ານ;

3.8. ຮັບຜິດຊອບວຽກງານການເງິນ ທີ່ບ້ານມີພັນທະໃນການເກັບຄ່າທໍານຽມ ແລະ ຄ່າບໍລິການທີ່ເປັນຄ່າບໍລິຫານທາງດ້ານວິຊາການ ທີ່ຂະແໜງການຕ່າງໆມອບໝາຍໃຫ້ເກັບສົ່ງໃຫ້ຂັ້ນເມືອງ ຕາມລະບຽບຂອງກະຊວງການເງິນ ແລະ ຕາມອັດຕາ ທີ່ລະບຸໄວ້ໃນລັດຖະບັນຍັດຂອງປະທານປະເທດ ທີ່ມີຜົນບັງຄັບໃຊ້ໃນເວລານັ້ນ ເຊັ່ນ: ຄ່າທໍານຽມນໍາໃຊ້ທີ່ດິນ, ອາກອນຊົມພະຍາກອນ...;

3.9. ສົ່ງເສີມ, ຈັດຕັ້ງກຸ່ມອາຊີບ ແລະ ປົກປ້ອງສິດຜົນປະໂຫຍດຂອງເຂົາເຈົ້າ;

3.10. ສະຫຼຸບ, ລາຍງານການຈັດຕັ້ງການເຄື່ອນໄຫວວຽກງານຂອງໜ່ວຍງານຕົນ;

3.11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**4. ວຽກງານວັດທະນະທໍາ-ສັງຄົມ**

4.1. ປຸກລະດົມ, ຊຸກຍູ້ປະຊາຊົນໃນການອອກແຮງງານລວມ, ປະກອບວັດຖຸປັດໄຈ ເພື່ອສ້າງສາ, ບູລະນະກິດຈະການສາທາລະນະປະໂຫຍດເຊັ່ນ: ໂຮງຮຽນ, ໂຮງໝໍ, ສຸກສາລາ, ວັດ, ໂບດ, ປ່າຊ້າ, ສະຖານກິລາ (ບ່ອນຫຼິ້ນກິລາ), ທໍ່ມູນເຊື້ອ, ຫໍສະໝຸດ, ຫໍຂ່າວ, ໂທລະໂຄ່ງບ້ານ ຫຼື ຊຸມຊົນ;

4.2. ປຸກລະດົມປະຊາຊົນໃຫ້ປະຕິບັດຕາມຫຼັກອະນາໄມ 3 ສະອາດ: ຢູ່ສະອາດ, ກິນດື່ມສະອາດ ແລະ ນຸ່ງຫົ່ມສະອາດ; ປະສານສົມທົບກັບພະນັກງານສາທາລະນະສຸກໃນການຈັດຕັ້ງປ້ອງກັນ, ປິ່ນປົວ ແລະ ສັກຢາກັນພະຍາດຕ່າງໆໃຫ້ແກ່ປະຊາຊົນ ໂດຍສະເພາະແມ່ນສໍາລັບແມ່ ແລະ ເດັກ;

4.3. ປຸກລະດົມປະຊາຊົນໃຫ້ເອົາໃຈໃສ່ຊ່ວຍເຫຼືອຄູ, ແພດໝໍ ແລະ ພະນັກງານຂະແໜງການຕ່າງໆທີ່ລົງມາປະຕິບັດໜ້າທີ່ປະຈໍາຢູ່ໃນບ້ານຂອງຕົນ; ປຸກລະດົມໃຫ້ເດັກໃນໄວຮຽນໃຫ້ໄດ້ເຂົ້າໂຮງຮຽນ; ສົ່ງເສີມຂະບວນການຮໍ່າຮຽນບໍາລຸງຍົກລະດັບການສຶກສາຂອງປະຊາຊົນພາຍໃນບ້ານ;

4.4. ເອົາໃຈໃສ່ຊຸກຍູ້ໃຫ້ປະຊາຊົນປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທໍາອັນດີງາມຂອງຊາດ, ຂອງທ້ອງຖິ່ນ, ປົກປັກຮັກສາປູຊະນີຍະສະຖານ ແລະ ວັດຖຸບູຮານໃນຂອບເຂດບ້ານຂອງຕົນ;

4.5. ຮັບຜິດຊອບຈັດຕັ້ງບຸນປະເພນີຕ່າງໆຂອງບ້ານ ແລະ ທ້ອງຖິ່ນ ໃຫ້ສອດຄ່ອງຕາມຮີດຄອງປະເພນີອັນດີງາມຂອງບ້ານ ແລະ ຂອງທ້ອງຖິ່ນຕົນ;

4.6. ຮັບຜິດຊອບຕໍ່ການປະຕິບັດນະໂຍບາຍຊ່ວຍເຫຼືອບຸກຄົນ ແລະ ຄອບຄົວທີ່ຖືກໄພພິບັດຈາກທໍາມະຊາດ, ຕົກທຸກໄດ້ຍາກ, ຂາດເຂີນທາງດ້ານວັດຖຸ ແລະ ແຮງງານທີ່ຢູ່ພາຍໃນບ້ານຂອງຕົນ ເຊັ່ນ: ຜູ້ເຖົ້າແກ່ຊະລາ, ແມ່ຮ້າງ, ແມ່ໝ້າຍ, ເດັກກໍາພ້າ-ກໍາພອຍ, ຜູ້ເສຍອົງຄະ...;

4.7. ສະຫຼຸບ, ລາຍງານການຈັດຕັ້ງການເຄື່ອນໄຫວວຽກງານຂອງໜ່ວຍງານຕົນ;

4.8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**5. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

5.1. ຈັດຕັ້ງການເຜີຍແຜ່ກົດໝາຍ, ລະບຽບການຂອງລັດໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ປະຊາຊົນຮັບຮູ້ເຂົ້າໃຈ, ຄຸ້ມຄອງແຮງງານຕ່າງປະເທດ ທີ່ມາພັກຢູ່ພາຍໃນບ້ານ; ນໍາພາສ້າງບ້ານໃຫ້ໄດ້ມາດຕະຖານມະຍົດຕ່າງໆທີ່ກໍານົດ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

5.2. ຊ່ວຍນາຍບ້ານປ້ອງກັນເຫດຮ້າຍໃນຂອບເຂດຂອງບ້ານ ແລະ ປະສານສົມທົບຮ່ວມມືກັບໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂອງບ້ານ, ສຶກສາອົບຮົມ, ລະງັບຄວາມຜິດຂ້ອງຕ້ອງຖຽງກັນ ແນໃສ່ສ້າງຄວາມສະຫງົບ, ເພີ່ມທະວີຄວາມສາມັກຄີ, ຄວາມຖືກຕ້ອງປອງດອງ ຊ່ວຍເຫຼືອກັນພາຍໃນບ້ານ;

5.3. ປະສານສົມທົບ ແລະ ຮ່ວມມືກັບທຸກກຳລັງຂອງລັດເຮັດວຽກປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

5.4. ຈັດຕັ້ງຈຸ, ໜ່ວຍເວນຍາມ ແລະ ປະຕິບັດວຽກປ້ອງກັນຊາດ-ປ້ອງກັນຄວາມສະຫງົບພາຍໃນບ້ານ;

5.5. ຄຸ້ມຄອງ ແລະ ນຳໃຊ້ງົບ ພັນທະວຽກປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງບ້ານໃຫ້ມີປະສິດທິຜົນ;

5.6. ສະຫຼຸບ, ລາຍງານການຈັດຕັ້ງການເຄື່ອນໄຫວວຽກງານຂອງໜ່ວຍງານຕົນ;

5.7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ການເລືອກຕັ້ງ ຫຼື ແຕ່ງຕັ້ງຄະນະອົງການປົກຄອງບ້ານ

**ມາດຕາ 9 ຫຼັກການ**

ການເລືອກຕັ້ງ ຫຼື ແຕ່ງຕັ້ງຄະນະອົງການປົກຄອງບ້ານໃນທົ່ວປະເທດປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ຫຼັກການພັກນຳພາ;
2. ຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລືເປັນໝູ່ຄະນະ;
3. ຫຼັກການລົງຄະແນນສຽງໂດຍກົງ ແລະ ປິດລັບ.

**ມາດຕາ 10 ທິດນຳ**

ການເລືອກຕັ້ງ ຫຼື ແຕ່ງຕັ້ງຄະນະອົງການປົກຄອງບ້ານໃນທົ່ວປະເທດຕ້ອງເອົາໃຈໃສ່ແຜນກຳນົດພະນັກງານນຳພາຄຸ້ມຄອງຂອງບ້ານໂດຍປະຕິບັດຕາມທິດນຳດັ່ງນີ້:

1. ໃຫ້ເລຂາ, ຮອງເລຂາ, ຄະນະພັກ (ຄະນະພັກຮາກຖານບ້ານ, ໜ່ວຍພັກຮາກຖານບ້ານ, ໜ່ວຍພັກບ້ານ) ສະໝັກຮັບເລືອກຕັ້ງເປັນຄະນະອົງການປົກຄອງບ້ານ;

2. ໃຫ້ສະມາຊິກພັກບ້ານ, ປະຊາຊົນພາຍໃນບ້ານຜູ້ທີ່ມີຄວາມຫ້າວຫັນເປັນແບບຢ່າງ ມີມາດຕະຖານເງື່ອນໄຂຄົບຖ້ວນ ໄດ້ຮັບຄວາມເຊື່ອຖືຮັກແພງ-ເຊື່ອໝັ້ນໄວ້ວາງໃຈຈາກປະຊາຊົນພາຍໃນບ້ານ ອອກສະໝັກຮັບເລືອກຕັ້ງເປັນຄະນະອົງການປົກຄອງບ້ານ;

3. ໃຫ້ເລືອກເຟັ້ນເອົາພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ທີ່ດຳລົງຊີວິດ ຫລື ເຮັດວຽກປະຈຳຢູ່ບ້ານ ລວມທັງຜູ້ທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ປະຕິບັດໜ້າທີ່ແບບມີກຳນົດຢູ່ຮາກຖານບ້ານນັ້ນ ແຕ່ ສອງປີຂຶ້ນໄປ ທີ່ມີລັກສະນະເປັນຜູ້ນຳ ເປັນນັກພັດທະນາ ໄດ້ຮັບຄວາມເຄົາລົບຮັກແພງ-ຄວາມເຊື່ອໝັ້ນໄວ້ວາງໃຈຈາກປະຊາຊົນພາຍໃນບ້ານອອກສະໝັກຮັບເລືອກຕັ້ງເປັນຄະນະອົງການປົກຄອງບ້ານ; ເມື່ອສິ້ນສຸດສະໄໝຂອງນາຍບ້ານກໍໃຫ້ກັບຄືນໄປສືບຕໍ່ວຽກງານໃນກົມກອງເດີມ;

4. ໃຫ້ແຕ່ງຕັ້ງພະນັກງານໄປເປັນນາຍບ້ານ, ຮອງນາຍບ້ານ ຢູ່ບ່ອນທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 11 ເງື່ອນໄຂ ແລະ ມາດຕະຖານຜູ້ມີສິດສະໝັກເປັນຄະນະອົງການປົກຄອງບ້ານ**

**1. ເງື່ອນໄຂຜູ້ມີສິດສະໝັກຮັບເລືອກຕັ້ງເປັນຄະນະອົງການປົກຄອງບ້ານ**

1.1. ສັນຊາດລາວໂດຍກຳເນີດ, ບໍ່ຈຳແນກເພດ, ເຜົ່າ, ສາສະໜາ;

1.2. ມີອາຍຸ ແຕ່ຊາວເອັດປີ ຂຶ້ນໄປ;

1.3. ບໍ່ເຄີຍຖືກໂທດຕັດອິດສະຫຼະພາບ;

1.4. ເປັນຜູ້ຕັ້ງຖິ່ນຖານຢູ່ບ້ານນັ້ນຢ່າງໜ້ອຍ ສອງ ປີເຕັມຂຶ້ນໄປ;

1.5. ມີສຸຂະພາບແຂງແຮງດີ.

**2. ມາດຕະຖານຜູ້ມີສິດຮັບສະໝັກເລືອກຕັ້ງເປັນຄະນະອີງການປົກຄອງບ້ານ**

2.1. ມີຄວາມສາມາດໃນການນໍາພາ-ຄຸ້ມຄອງບໍລິຫານປະຊາຊົນພາຍໃນບ້ານຂອງຕົນເພື່ອຫັນແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດມາຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ, ມີຄວາມສາມາດໃນການວາງແຜນການ ແລະ ນໍາພາປະຕິບັດແຜນພັດທະນາບ້ານ;

2.2. ເປັນຜູ້ມີຄວາມຈົງຮັກພັກດີ, ບໍລິສຸດຊື່ສັດ ຕໍ່ພັກ-ລັດ, ມີທັດສະນະມະຫາຊົນຖືກຕ້ອງ, ມີສະຕິເຄົາລົບລະບຽບກົດໝາຍ, ຮູ້ລະດົມຂົນຂວາຍ ເຕົ້າໂຮມຄວາມສາມັກຄີ, ຕື່ນຕົວຫ້າວຫັນ, ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈຈາກປະຊາຊົນ ແລະ ຊົນຄົນຕ່າງໆຢູ່ພາຍໃນບ້ານ;

2.3. ມີລະດັບການສຶກສາຂັ້ນລົບລ້າງການກົກໜັງສືສໍາລັບບ້ານເຂດຊົນນະບົດ ຫ່າງໄກສອກຫຼີກ ຫຼື ສາມາດອ່ານຂຽນໜັງສືໄດ້; ຈົບຊັ້ນປະຖົມຂຶ້ນໄປສໍາລັບບ້ານເຂດຊານເມືອງ ແລະ ບ້ານຢູ່ໃນເຂດຕົວເມືອງໃຫ້ຈົບມັດທະຍົມຕອນຕົ້ນຂຶ້ນໄປ ຫຼື ໄດ້ຮັບການບໍາລຸງຄວາມຮູ້ການຄຸ້ມຄອງຕົວເມືອງ;

ນອກຈາກເງື່ອນໄຂ ແລະ ມາດຕະຖານ ທີ່ກໍານົດຂ້າງເທິງນີ້ແລ້ວ ຜູ້ມີສິດສະໝັກຮັບເລືອກຕັ້ງ ເປັນຄະນະອີງການປົກຄອງບ້ານ ຍັງຕ້ອງແມ່ນສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ ທີ່ຕັ້ງຖິ່ນຖານຢູ່ໃນບ້ານນັ້ນ ລວມທັງພະນັກງານ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ແບບມີກໍານົດຢູ່ຮາກຖານບ້ານນັ້ນ ແຕ່ສອງປີຂຶ້ນໄປ ທີ່ມີລັກສະນະເປັນຜູ້ນໍາ; ກຽມພ້ອມຮັບໃຊ້ປະຊາຊົນ ແລະ ເປັນນັກພັດທະນາ; ໄດ້ຮັບຄວາມເຄົາລົບຮັກແພງ-ຄວາມເຊື່ອໝັ້ນໄວ້ວາງໃຈຈາກປະຊາຊົນພາຍໃນບ້ານ.

**ມາດຕາ 12 ຜູ້ມີສິດເລືອກຕັ້ງຄະນະອີງການປົກຄອງບ້ານ**

ຜູ້ມີສິດເລືອກຕັ້ງຄະນະອີງການປົກຄອງບ້ານຕ້ອງເປັນຄົນສັນຊາດລາວ, ມີອາຍຸ ສິບແປດ ປີຂຶ້ນໄປ, ບໍ່ຈໍາແນກເພດ, ເຜົ່າ, ສາສະ ໜາ, ມີຊື່ຂຶ້ນສໍາມະໂນຄົວໃນບ້ານນັ້ນ.

**ມາດຕາ 13 ຈໍານວນຜູ້ສະໝັກຮັບເລືອກຕັ້ງເປັນຄະນະອີງການປົກຄອງບ້ານ ແລະ ຈໍານວນຮອງນາຍບ້ານ**

ຈໍານວນຜູ້ສະໝັກຮັບເລືອກຕັ້ງ ຕ້ອງມີຫຼາຍກວ່າຈໍານວນຄະນະອີງການປົກຄອງບ້ານຕາມທີ່ໄດ້ກໍານົດເອົາ.

ສໍາລັບຈໍານວນຮອງນາຍບ້ານໃຫ້ກໍານົດດັ່ງນີ້:

1. ບ້ານທີ່ມີຈໍານວນພົນລະເມືອງບໍ່ເກີນ ຫ້າຮ້ອຍຄົນ ໃຫ້ມີຮອງນາຍບ້ານ ສອງ ຄົນ;
2. ບ້ານທີ່ມີຈໍານວນພົນລະເມືອງ ຫຼາຍກວ່າ ຫ້າຮ້ອຍຄົນ ຫາ ໜຶ່ງພັນຄົນ ໃຫ້ມີຮອງນາຍບ້ານບໍ່ເກີນ ສາມ ຄົນ;
3. ບ້ານທີ່ມີຈໍານວນພົນລະເມືອງຫຼາຍກວ່າ ໜຶ່ງພັນຄົນຂຶ້ນໄປ ໃຫ້ມີຮອງນາຍບ້ານບໍ່ເກີນ ສີ່ ຄົນ.

**ມາດຕາ 14 ວັນ ແລະ ໄລຍະເວລາຂອງການເລືອກຕັ້ງ**

ວັນ ແລະ ໄລຍະເວລາປ່ອນບັດເລືອກຕັ້ງຄະນະອີງການປົກຄອງບ້ານ ແມ່ນ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ຕົກລົງ ບົນພື້ນຖານການສະເໜີຂອງນາຍບ້ານ.

**ມາດຕາ 15 ການກະກຽມການເລືອກຕັ້ງຄະນະອີງການປົກຄອງບ້ານ**

ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບການແຕ່ງຕັ້ງ ລົງນໍາພາປະຊາຊົນຈັດກອງປະຊຸມບ້ານ ເພື່ອເລືອກຕັ້ງເອົາຄະນະອີງການປົກຄອງບ້ານຊຸດໃໝ່ ໃຫ້ສໍາເລັດພາຍໃນ ສາມສິບວັນລັດຖະການ; ການກະກຽມການ ໃຫ້ປະຕິບັດດັ່ງນີ້:

**1. ການກະກຽມສໍາລັບຂັ້ນເມືອງ**

1.1. ຫ້ອງການພາຍໃນເກັບກໍາ, ສັງລວມບັນດາບ້ານ ທີ່ກໍາລັງຈະໝົດສະໄໝ ຫຼື ບ້ານທີ່ມີການປ່ຽນແປງ, ປັບປຸງການຈັດຕັ້ງບ້ານ ແລະ ແຈ້ງໃຫ້ບ້ານຊາບ ເພື່ອກະກຽມຈັດກອງປະຊຸມປ່ອນບັດເລືອກຕັ້ງ;

1.2. ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງຄະນະຮັບຜິດຊອບປັບປຸງການຈັດຕັ້ງບ້ານ ລົງໄປຊີ້ນຳ-ນຳພາບ້ານ ໃນການກະກຽມການເລືອກຕັ້ງຄະນະອົງການປົກຄອງບ້ານ; ຄະນະຮັບຜິດຊອບປັບປຸງການຈັດຕັ້ງບ້ານ ປະກອບດ້ວຍ: ຄະນະຈັດຕັ້ງ, ອົງການກວດກາລັດ, ຫ້ອງການພາຍໃນ, ຫ້ອງວ່າການ ແລະ ພາກສ່ວນກ່ຽວຂ້ອງຈຳນວນໜຶ່ງທີ່ຈຳເປັນ; ໜ້າທີ່ຄວາມຮັບຜິດຊອບຂອງຄະນະຮັບຜິດຊອບປັບປຸງການຈັດຕັ້ງບ້ານ ມີດັ່ງນີ້:

– ນຳພາຄົ້ນຄວ້າແຕ່ງຕັ້ງຄະນະກະກຽມການເລືອກຕັ້ງ ແລະ ອະນຸກຳມະການຕ່າງໆຂອງບ້ານ;
– ນຳພາສ້າງເອກະສານຮັບໃຊ້ການເລືອກຕັ້ງ;
– ນຳພາຄົ້ນຄວ້າເປົ້າໝາຍອອກສະໝັກຮັບເລືອກຕັ້ງ;
– ນຳພາຈັດຕັ້ງການປ່ອນບັດເລືອກຕັ້ງ;
– ລາຍງານຜົນການເລືອກຕັ້ງໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ ເພື່ອອອກຂໍ້ຕົກລົງແຕ່ງຕັ້ງນາຍບ້ານ ແລະ ຮອງນາຍບ້ານ.

**2. ການກະກຽມສຳລັບຂັ້ນບ້ານ**

2.1. ຄະນະປົກຄອງບ້ານກຳນົດແຜນການປ່ອນບັດເລືອກຕັ້ງ;

2.2. ຈັດກອງປະຊຸມ ເພື່ອນຳສະເໜີແຜນການປ່ອນບັດເລືອກຕັ້ງ ໃຫ້ການຈັດຕັ້ງທຸກພາກສ່ວນ ແລະ ປະຊາຊົນພາຍໃນບ້ານ ເພື່ອຮັບຊາບ ແລະ ມີຄວາມເປັນເອກະພາບ;

2.3. ນາຍບ້ານແຕ່ງຕັ້ງຄະນະກະກຽມການເລືອກຕັ້ງ ແລະ ອະນຸກຳມະການຮັບຜິດຊອບປ່ອນບັດເລືອກຕັ້ງ; ຄະນະກະກຽມເລືອກຕັ້ງປະກອບດ້ວຍ: ຮອງເລຂາພັກບ້ານ, ຮອງນາຍບ້ານ, ປະທານແນວລາວສ້າງຊາດບ້ານ (ແນວໂຮມ), ປະທານສະຫະພັນແມ່ຍິງບ້ານ; ເລຂາຊາວໜຸ່ມປະຊາຊົນປະຕິວັດລາວບ້ານ, ປະທານສະຫະພັນນັກຮົບເກົ່າ ແລະ ຜູ້ຊົງຄຸນວຸດທິ ຊຶ່ງໜ້າທີ່ຮັບຜິດຊອບ ມີດັ່ງນີ້:

– ກະກຽມມາດຕະຖານເງື່ອນໄຂຂອງຜູ້ທີ່ຈະອອກສະໝັກຮັບເລືອກຕັ້ງ;
– ຄົ້ນຄວ້າເປົ້າໝາຍທາບທາມເພື່ອອອກສະໝັກຮັບເລືອກຕັ້ງ;
– ແຈ້ງລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ແລະ ຂຶ້ນບັນຊີເກັບກຳຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງນາຍບ້ານໃຫ້ປະຊາຊົນພາຍໃນບ້ານຊາບກ່ອນວັນເລືອກຕັ້ງຢ່າງໜ້ອຍສິບຫ້າວັນ;
– ປະກາດແຈ້ງການໃຫ້ປະຊາຊົນກ່ຽວກັບວັນເວລາ, ສະຖານທີ່ເລືອກຕັ້ງ ແລະ ບັນຫາອື່ນໆ;
– ກະກຽມບົດສະຫຼຸບການເຄື່ອນໄຫວວຽກງານຂອງອົງການປົກຄອງບ້ານໃນໄລຍະຜ່ານມາ ແລະ ແຜນການສຳລັບສະໄໝຕໍ່ໄປ, ເອກະສານອື່ນໆ ທີ່ຈຳເປັນເພື່ອຮັບໃຊ້ການດຳເນີນການເລືອກຕັ້ງ;
– ສ້າງແຜນການດຳເນີນການເລືອກຕັ້ງ.

2.4. ນາຍບ້ານສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອຂໍອະນຸມັດຈັດການປ່ອນບັດເລືອກຕັ້ງ;

2.5. ສຳນວນເອກະສານກ່ຽວກັບການຈັດການປ່ອນບັດເລືອກຕັ້ງມີ: ໃບລົງທະບຽນ, ວາລະດຳເນີນການປ່ອນບັດ, ບັດເຊີນ, ບົດກ່າວຈຸດປະສົງ, ບົດກ່າວເປີດ, ບົດກ່າວປິດ, ບົດສະຫຼຸບການເຄື່ອນໄຫວຂອງອົງການປົກຄອງບ້ານໄລຍະຜ່ານມາ ແລະ ແຜນການໃນຕໍ່ໜ້າ, ບົດກ່າວອຳລາໜ້າທີ່ຂອງນາຍບ້ານ ແລະ ຄະນະອົງການປົກຄອງບ້ານຊຸດເກົ່າ.

**3. ການກະກຽມຄົ້ນຄວ້າເປົ້າໝາຍອອກສະໝັກຮັບເລືອກຕັ້ງ**

3.1. ກະກຽມເປົ້າໝາຍໄປທາບທາມທາງສຽງ ເພື່ອໃຫ້ລົງສະໝັກຮັບເລືອກຕັ້ງ ໂດຍຄັດເລືອກຈາກປະຊາຊົນ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ທີ່ຕັ້ງຖິ່ນຖານປະຈຳ ລວມທັງພະນັກງານຮາກຖານທີ່ເຮັດວຽກປະຈຳຢູ່ໃນບ້ານນັ້ນແຕ່ ສອງ ປີຂຶ້ນໄປ;

3.2. ຈັດຕັ້ງການສຶກສາອົບຮົມການເມືອງແນວຄິດ ເພື່ອການເລືອກຕັ້ງທັງພາຍໃນພັກ ແລະ ປະ ຊາ ຊົນພາຍໃນບ້ານ;

3.3. ນໍາພາຈັດຕັ້ງການທາບທາມທາງສຽງຮອບທີໜຶ່ງ (ຄອບຄົວ, ຫົວໜ້າໜ່ວຍຄອບຄົວ);

3.4. ວິເຄາະຜົນການທາບທາມທາງສຽງຮອບທີໜຶ່ງ;

3.5. ຖ້າຈໍາເປັນໃຫ້ດໍາເນີນການສຶກສາອົບຮົມການເມືອງແນວຄິດຮອບທີສອງ;

3.6. ນໍາພາຈັດຕັ້ງການທາບທາມທາງສຽງຮອບທີສອງ;

3.7. ວິເຄາະຜົນການທາບທາມທາງສຽງຮອບທີສອງ;

3.8. ຖ້າບັນລຸຄາດໝາຍກໍລາຍງານຜົນການທາບທາມທາງສຽງໃຫ້ເຈົ້າເມືອງ, ຫົວໜ້າເທດສະ ບານ, ເຈົ້ານະຄອນ ຮັບຊາບ ເພື່ອອອກຂໍ້ຕົກລົງໃຫ້ຈັດຕັ້ງການປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານຕາມລະບຽບ;

3.9. ຖ້າບໍ່ບັນລຸຄາດໝາຍກໍຕ້ອງລາຍງານໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາ ລະນາ ເພື່ອມີການຊີ້ນໍາໃນການດໍາເນີນການສໍາລັບຂັ້ນຕໍ່ໄປ.

**ມາດຕາ 16 ການດໍາເນີນການເລືອກຕັ້ງ**

ການດໍາເນີນການເລືອກຕັ້ງ ໃຫ້ປະຕິບັດ ດັ່ງນີ້:

1. ລົງທະບຽນ;
2. ຄະນະປະທານ ແລະ ແຂກເຂົ້າຮ່ວມ ປະຈໍາທີ່;
3. ເຄົາລົບທຸງຊາດ;
4. ກ່າວຕ້ອນຮັບ, ສະເໜີຈຸດປະສົງ ແລະ ສະເໜີແຂກທີ່ເຂົ້າຮ່ວມ;
5. ສະເໜີລາຍຊື່ຜູ້ເປັນຄະນະປະທານ ຊຶ່ງປະກອບມີ: ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຫຼື ຜູ້ຕາງໜ້າ, ຫົວໜ້າຫ້ອງການພາຍໃນ, ນາຍບ້ານ, ເລຂາພັກ (ຄະນະພັກຮາກຖານບ້ານ, ໜ່ວຍພັກຮາກຖານ ບ້ານ, ໜ່ວຍພັກບ້ານ), ປະທານແນວລາວສ້າງຊາດບ້ານ, ຕາງໜ້າອົງການຈັດຕັ້ງມະຫາຊົນ;
6. ຜ່ານຂໍ້ຕົກລົງວ່າດ້ວຍການອະນຸມັດດໍາເນີນການປ່ອນບັດເລືອກຕັ້ງ;
7. ນາຍບ້ານກ່າວເປີດພິທີຢ່າງເປັນທາງການ;
8. ນາຍບ້ານ ຫຼື ຕາງໜ້າອົງການປົກຄອງບ້ານ ຜ່ານບົດສະຫຼຸບການເຄື່ອນໄຫວໄລຍະຜ່ານມາ ແລະ ແຜນການຕໍ່ໜ້າຂອງບ້ານ;
9. ຜູ້ເຂົ້າຮ່ວມປະກອບຄໍາເຫັນ;
10. ນາຍບ້ານ ແລະ ຄະນະອົງການປົກຄອງບ້ານຊຸດເກົ່າກ່າວອໍາລາໜ້າທີ່;
11. ຫ້ອງການພາຍໃນຜ່ານມາດຕະຖານ ແລະ ເງື່ອນໄຂຂອງຜູ້ຮັບສະໝັກເປັນນາຍບ້ານຊຸດໃໝ່;
12. ແຈ້ງລາຍຊື່ຜູ້ສະໝັກຮັບເລືອກຕັ້ງ;
13. ຜູ້ລົງສະໝັກຮັບເລືອກຕັ້ງ ແນະນໍາໂຕ ແລະ ສະເໜີ ນະໂຍບາຍຂອງຕົນເອງຕາມວິທີທີ່ເໝາະສົມ;
14. ແຕ່ງຕັ້ງຄະນະກໍາມະການຄວບຄຸມການປ່ອນບັດ;
15. ຄະນະຄວບຄຸມການປ່ອນບັດຂຶ້ນຮັບໜ້າທີ່, ຜ່ານລະບຽບ, ຄໍາແນະນໍາໃນການປ່ອນບັດ ແລະ ກ່າວປະຕິຍານຕົນ;
16. ດໍາເນີນການປ່ອນບັດເລືອກຕັ້ງ: ຜູ້ມີສິດລົງທະບຽນຮັບບັດ, ກາບັດລົງຄະແນນສຽງແບບປິດລັບ ແລະ ປ່ອນບັດ;
17. ຄະນະຄວບຄຸມການປ່ອນບັດນັບຄະແນນແບບເປີດເຜີຍຊ້ອງໜ້າຄະນະປະທານ ແລະ ປະຊາຊົນ ພ້ອມທັງມອບວາລະໃຫ້ຄະນະປະທານ;
18. ດໍາເນີນກອງປະຊຸມຄັ້ງປະຖົມມະລຶກ;

19. ຕາງໜ້າຄະນະປະທານປະກາດຜົນການປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ;

20. ຜ່ານບົດບັນທຶກການປ່ອນບັດເລືອກຕັ້ງໂດຍສະເໜີຂັ້ນຕອນການດຳເນີນການເລືອກຕັ້ງ, ຈຳນວນຜູ້ສະໝັກຮັບເລືອກຕັ້ງ, ຈຳນວນຜູ້ມາປ່ອນບັດເລືອກຕັ້ງ, ຄະແນນຜູ້ສະໝັກຮັບເລືອກຕັ້ງຂອງແຕ່ລະຄົນ, ຜົນການເລືອກຕັ້ງຄະນະອົງການປົກຄອງບ້ານ, ບັນຍາກາດການເລືອກຕັ້ງ; ຜູ້ບັນທຶກ ແລະ ນາຍບ້ານ ເປັນຜູ້ລົງລາຍເຊັນຮັບຮູ້;

21. ຄະນະປະທານມີຄຳເຫັນ ແລະ ກ່າວປິດ ຢ່າງເປັນທາງການ.

**ມາດຕາ 17 ຮູບແບບການຈັດພິທີເລືອກຕັ້ງ**

ການຈັດພິທີເລືອກຕັ້ງ ໃຫ້ປະຕິບັດ ດັ່ງນີ້:

1. ຊື່ປະເທດ ແລະ ຄຳຂວັນ: ຈັດວາງໃສ່ກາງເວທີ ໃຫ້ສູງກວ່າທຸງຊາດ ແລະ ທຸງພັກ;

2. ທຸງຊາດ ແລະ ທຸງພັກ: ຈັດວາງໃສ່ກາງເວທີ ຢູ່ກ້ອງ ຊື່ປະເທດ ແລະ ຄຳຂວັນ;

3. ຮູບ ປະທານ ໄກສອນ ພົມວິຫານ: ຈັດວາງໃສ່ກາງເວທີ ຢູ່ກ້ອງ ທຸງຊາດ ແລະ ທຸງພັກ;

4. ຄຳວ່າ: ກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ ຄັ້ງທີ...........: ຈັດວາງໃສ່ກາງເວທີຢູ່ກ້ອງຮູບ ປະທານ ໄກສອນ ພົມວິຫານ;

5. ຄຳຂວັນຂອງບ້ານ(ຖ້າມີ): ຈັດວາງໃສ່ກາງເວທີ ຢູ່ກ້ອງຄຳວ່າ: ການປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ.

**ມາດຕາ 18 ການຮັບຮອງຜົນການເລືອກຕັ້ງ**

1. ຄະນະຮັບຜິດຊອບການເລືອກຕັ້ງ ສະເໜີຜົນການເລືອກຕັ້ງໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຮັບຮອງ ແລະ ອອກຂໍ້ຕົກລົງແຕ່ງຕັ້ງນາຍບ້ານ ແລະ ຮອງນາຍບ້ານ ໃຫ້ສຳເລັດພາຍໃນ ສິບວັນລັດຖະການ;

2. ໃຫ້ມີການຈັດຕັ້ງມອບໂອນໜ້າທີ່ລະຫວ່າງນາຍບ້ານຜູ້ເກົ່າ ກັບນາຍບ້ານຜູ້ໃໝ່ ພາຍໃນເວລາຫ້າວັນລັດຖະການ ພາຍຫຼັງຈາກເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເຊັນຂໍ້ຕົກລົງແຕ່ງຕັ້ງນາຍບ້ານຜູ້ໃໝ່.

**ມາດຕາ 19 ການແຕ່ງຕັ້ງນາຍບ້ານໂດຍກົງໃນບ້ານ ທີ່ມີຄວາມຈຳເປັນ**

ໃນກໍລະນີຈຳເປັນ ທີ່ບໍ່ສາມາດຈັດການເລືອກຕັ້ງໄດ້; ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ແຕ່ງຕັ້ງບົ່ງຕົວນາຍບ້ານໂດຍມີການລຸ່ລວງປະຊາຊົນພາຍໃນບ້ານ.

ກ່ອນມີການແຕ່ງຕັ້ງບົ່ງຕົວນາຍບ້ານຕ້ອງໄດ້ປະຕິບັດຕາມຂັ້ນຕອນການຄົ້ນຄວ້າ ດັ່ງຕໍ່ໄປນີ້:

1. ບົນພື້ນຖານຂໍ້ມູນ ແລະ ຕົວຊີ້ບອກກ່ຽວກັບສະພາບຕ່າງໆທີ່ມີທ່າອ່ຽງຫຍໍ້ທໍ້ຂອງບ້ານເປົ້າໝາຍ; ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງຄະນະຮັບຜິດຊອບ ລົງໄປເກັບກຳ ແລະ ປະເມີນສະພາບຂອງບ້ານ ເພື່ອລາຍງານໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາເຖິງຄວາມຈຳເປັນທີ່ແທ້ຈິງ;

2. ຫ້ອງການພາຍໃນສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງໄປເຮັດວຽກ ແລະ ນຳພາປັບປຸງການຈັດຕັ້ງຂອງບ້ານຕາມສະພາບຄວາມຈຳເປັນຕາມຂັ້ນຕອນ ດັ່ງນີ້:

2.1. ລົງຊີ້ນຳ-ນຳພາອົງການປົກຄອງບ້ານຊຸດເກົ່າປະຕິບັດໜ້າທີ່ໄປຕໍ່ໄລຍະໜຶ່ງ ເພື່ອກຳສະພາບການຕ່າງໆຂອງບ້ານໃຫ້ເລິກເຊິ່ງ;

2.2. ນຳພາອົງການປົກຄອງບ້ານ ປະເມີນຜົນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງບ້ານ ແລະ ຕີລາຄາຈັດປະເພດພະນັກງານຂອງບ້ານ;

2.3. ຊອກຫາເປົ້າໝາຍເພື່ອແຕ່ງຕັ້ງເປັນນາຍບ້ານຂອງບ້ານທີ່ຈຳເປັນ ໂດຍເລີ່ມຈາກສະມາຊິກພັກ, ປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ທີ່ຕັ້ງຖິ່ນຖານ ຢູ່ໃນບ້ານ ລວມທັງພະນັກງານຮາກຖານທີ່

ໄດ້ຮັບການແຕ່ງຕັ້ງໃຫ້ລົງເຮັດວຽກປະຈໍາຢູ່ບ້ານນັບແຕ່ ສອງ ປີຂຶ້ນໄປກ່ອນ; ຖ້າບໍ່ມີຜູ້ຄົບເງື່ອນໄຂໃຫ້ຄະນະຮັບຜິດຊອບລາຍງານເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາຄັດເລືອກເປົ້າໝາຍອື່ນທີ່ບໍ່ໄດ້ຕັ້ງຖິ່ນຖານຢູ່ໃນບ້ານນັ້ນ ຫຼື ຕັ້ງຖິ່ນຖານຢູ່ໃນບ້ານນັ້ນ ບໍ່ຄົບ ສອງ ປີ ເພື່ອແຕ່ງຕັ້ງເປັນນາຍບ້ານ;

2.4. ເປີດກອງປະຊຸມບ້ານ ເພື່ອສະເໜີເປົ້າໝາຍ ແລະ ລຸລ່ວງ ຫຼື ຊີ້ແຈງໃຫ້ປະຊາຊົນໃນບ້ານ ຮັບຮູ້ ແລະ ເຂົ້າໃຈເຖິງ ຄວາມຈໍາເປັນ;

2.5. ສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ອອກຂໍ້ຕົກລົງແຕ່ງຕັ້ງນາຍບ້ານຜູ້ໃໝ່ ພາຍໃນ ສິບວັນລັດຖະການ;

2.6. ຈັດຕັ້ງການມອບໂອນໜ້າທີ່ ລະຫວ່າງ ນາຍບ້ານຜູ້ເກົ່າ ແລະ ນາຍບ້ານຜູ້ໃໝ່ ພາຍໃນເວລາຫ້າວັນລັດຖະການ ຫຼັງຈາກເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໄດ້ເຊັນຂໍ້ຕົກລົງແຕ່ງຕັ້ງນາຍບ້ານຜູ້ໃໝ່.

## ໝວດທີ 4
## ການພົ້ນຈາກຕໍາແໜ່ງ

### ມາດຕາ 20 ການພົ້ນຈາກຕໍາແໜ່ງຂອງນາຍບ້ານ ແລະ ຮອງນາຍບ້ານ

ນາຍບ້ານ ແລະ ຮອງນາຍບ້ານ ພົ້ນຈາກຕໍາແໜ່ງໄດ້ໃນກໍລະນີ ດັ່ງນີ້:

1. ໝົດອາຍຸການ;
2. ເສຍຊີວິດ;
3. ໄດ້ຮັບອະນຸຍາດລາອອກ;
4. ຖືກປົດຕໍາແໜ່ງຍ້ອນມີຄວາມບົກຜ່ອງ ຫຼື ຂາດຄວາມສາມາດໃນການປະຕິບັດໜ້າທີ່;
5. ປະລະໜ້າທີ່ ກາຍສາມ ເດືອນໂດຍບໍ່ໄດ້ມອບໝາຍໜ້າທີ່ໃຫ້ຄະນະຜູ້ໃດໜຶ່ງ;
6. ບ້ານທີ່ຕົນປົກຄອງມີການປ່ຽນແປງ ເຊັ່ນ: ຖືກຍຸບເລີກ, ໂຮມເຂົ້າ, ແຍກອອກ.

### ມາດຕາ 21 ການຮັກສາການແທນ

ໃນກໍລະນີນາຍບ້ານບໍ່ສາມາດມາປະຈໍາການປະຕິບັດໜ້າທີ່ໄດ້, ນາຍບ້ານຕ້ອງມອບໝາຍໃຫ້ຮອງນາຍບ້ານຜູ້ໃດໜຶ່ງ ເປັນຜູ້ຮັກສາການ ແລະ ປະຕິບັດໜ້າທີ່ແທນ.

ໃນກໍລະນີນາຍບ້ານ ເສຍຊີວິດ, ໄດ້ຮັບອະນຸຍາດລາອອກ, ຖືກປົດຕໍາແໜ່ງຍ້ອນມີຄວາມບົກຜ່ອງ ຫຼື ຂາດຄວາມສາມາດໃນການປະຕິບັດໜ້າທີ່, ປະລະໜ້າທີ່ ກາຍສາມ ເດືອນໂດຍບໍ່ໄດ້ມອບໝາຍໜ້າທີ່ໃຫ້ຮອງຜູ້ໃດໜຶ່ງ; ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງຮອງນາຍບ້ານເປັນຜູ້ຮັກສາການແທນຈົນກວ່າຈະມີການເລືອກຕັ້ງ ຫຼື ແຕ່ງຕັ້ງນາຍບ້ານຜູ້ໃໝ່ ແຕ່ບໍ່ໃຫ້ກາຍກໍານົດເວລາ ສາມສິບ ວັນລັດຖະການ.

ໃນໄລຍະລໍຖ້າຜົນການເລືອກຕັ້ງ ແລະ ແຕ່ງຕັ້ງນາຍບ້ານຜູ້ໃໝ່; ນາຍບ້ານຜູ້ເກົ່າ ເປັນຜູ້ຮັກສາການມີສິດແກ້ໄຂວຽກງານບໍລິຫານ ທີ່ຈໍາເປັນເທົ່ານັ້ນ ຈົນກວ່ານາຍບ້ານຜູ້ໃໝ່ໄດ້ຮັບການແຕ່ງຕັ້ງ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການທາງວິໄນ

### ມາດຕາ 22 ຂໍ້ຫ້າມ

ຂໍ້ຫ້າມສໍາລັບນາຍບ້ານ, ຮອງນາຍບ້ານ ແລະ ພະນັກງານຊ່ວຍວຽກບ້ານ ມີພຶດຕິກໍາດັ່ງນີ້:

1. ໂຄສະນາຕ້ານ ຫຼື ບິດເບືອນແນວທາງຂອງພັກ, ນະໂຍບາຍ, ກົດໝາຍຂອງລັດ;

2. ສວຍໃຊ້ອຳນາດ, ໜ້າທີ່ ກົດໜ່ວງຖ່ວງດຶງແກ້ໄຂວຽກ, ແກ້ໄຂເອກະສານ ຊຶ່ງສ້າງຄວາມເສຍຫາຍ ຫຼື ຄວາມຫຍຸ້ງຍາກ ໃຫ້ປະຊາຊົນ ຫຼື ນິຕິບຸກຄົນ ເພື່ອຜົນປະໂຫຍດໃດໜຶ່ງ;

3. ເກັບຄ່າທຳນຽມ, ຄ່າບໍລິການ, ພັນທະຕ່າງໆ ເກີນລະບຽບການ ຫຼື ການກຳນົດທີ່ໄດ້ເອກະພາບພາຍໃນບ້ານ ແລະ ຫ້າມມີການເກັບເພີ່ມນອກເໜືອລາຍການເກັບ ທີ່ໄດ້ມີການກຳນົດຮັບຮອງແລ້ວ ໂດຍບໍ່ແຈ້ງ ແລະ ບໍ່ໄດ້ຮັບການເຫັນດີຈາກພາກສ່ວນທີ່ກ່ຽວຂ້ອງ;

4. ຫ້າມນຳໃຊ້ ຫຼື ຂາຍຊັບສິນລວມຂອງບ້ານ ໂດຍບໍ່ໄດ້ຮັບການເຫັນດີຈາກປະຊາຊົນ ຢູ່ໃນກອງປະຊຸມຂອງບ້ານ ທີ່ມີປະຊາຊົນເຂົ້າຮ່ວມຢ່າງໜ້ອຍ ສາມສ່ວນສີ່ ຂອງຈຳນວນປະຊາຊົນທັງໝົດ;

5. ມີພຶດຕິກຳອື່ນທີ່ກໍ່ໃຫ້ເກີດຜົນກະທົບໃຫ້ແກ່ອົງການປົກຄອງບ້ານ ຫຼື ມີພຶດຕິກຳທີ່ເປັນການລະເມີດລະບຽບການ ແລະ ກົດໝາຍ.

**ມາດຕາ 23 ການປະຕິບັດມາດຕະການທາງວິໄນ**

ໃນກໍລະນີ ນາຍບ້ານ, ຮອງນາຍບ້ານ ແລະ ພະນັກງານຊ່ວຍວຽກບ້ານ ມີຄວາມບົກຜ່ອງ ຫຼື ມີການລະເມີດຂໍ້ຫ້າມທີ່ກຳນົດໄວ້ໃນ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້ ແມ່ນຕ້ອງໄດ້ຮັບການພິຈາລະນາທາງວິໄນ ໂດຍຄະນະກຳມະການວິໄນຂອງເມືອງ, ເທດສະບານ, ນະຄອນ ຕາມກໍລະນີໜັກ ຫຼື ເບົາ ຂອງຂັ້ນມາດຕະການທາງວິໄນ.

**ມາດຕາ 24 ຂັ້ນມາດຕະການທາງວິໄນ**

ຂັ້ນມາດຕະການທາງວິໄນມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນໜຶ່ງ: ຕິຕຽນ ໂດຍມີການບັນທຶກເປັນຫຼັກຖານ;
2. ຂັ້ນສອງ: ກ່າວເຕືອນ ແລະ ໃຫ້ມີການຂຽນໃບສຳຫຼວດຕົນເອງ ໂດຍມີການບັນທຶກເປັນຫຼັກຖານ;
3. ຂັ້ນສາມ: ພິຈາລະນາໂຈະການຮັບລະບອບອຸດໜູນເປັນເວລາສາມເດືອນ ຫຼື ກໍລະນີຮ້າຍແຮງ ກໍພິຈາລະນາ ປົດອອກຈາກຕຳແໜ່ງ, ໜ້າທີ່ຮັບຜິດຊອບ ແລະ ຖືກປະຕິບັດຕາມລະບຽບກົດໝາຍ.

**ມາດຕາ 25 ຄະນະກຳມະການວິໄນຂອງເມືອງ, ເທດສະບານ, ນະຄອນ**

ຄະນະກຳມະການວິໄນຂອງຂັ້ນເມືອງໄດ້ຮັບການແຕ່ງຕັ້ງໂດຍ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຊຶ່ງປະກອບດ້ວຍ:

| | |
|---|---|
| 1. ຮອງເລຂາພັກ, ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້ານະຄອນ ຜູ້ຊີ້ນຳວຽກງານພາຍໃນ | ເປັນຫົວໜ້າ; |
| 2. ຫົວໜ້າ ຄະນະຈັດຕັ້ງ | ເປັນຮອງຫົວໜ້າ; |
| 3. ຫົວໜ້າ ຫ້ອງການພາຍໃນ | ເປັນຮອງຫົວໜ້າ; |
| 4. ປະທານ ອົງການກວດກາລັດ | ເປັນຄະນະ; |
| 5. ຫົວໜ້າ ຫ້ອງວ່າການ | ເປັນຄະນະ; |
| 6. ພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ທີ່ຈຳເປັນ | ເປັນຄະນະ. |

## ໝວດທີ 6
## ເອກະສານທາງການຂອງອົງການປົກຄອງບ້ານ

**ມາດຕາ 26 ຄວາມໝາຍຂອງເອກະສານ**

ເອກະສານແມ່ນຂໍ້ມູນຂ່າວສານທີ່ບັນທຶກໃສ່ວັດຖຸທີ່ແຕກຕ່າງກັນດ້ວຍຫຼາຍຮູບແບບເຊັ່ນ: ເປັນລາຍລັກອັກສອນ, ພາບ, ສຽງ ທີ່ສ່ອງແສງເຖິງເຫດການ ຫຼື ປະກົດການໃດໜຶ່ງ ສ້າງຂຶ້ນໃນຂະບວນການເຄື່ອນ

ໄຫວຂອງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ນິຕິບຸກຄົນ, ບຸກຄົນ ເພື່ອເປັນເຄື່ອງມື ແລະ ພາຫະນະໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ຕິດຕໍ່ພົວພັນ ຊຶ່ງກັນ ແລະ ກັນ.

**ມາດຕາ 27 ເອກະສານຂອງອົງການປົກຄອງບ້ານ**

ເອກະສານຂອງອົງການປົກຄອງບ້ານ ປະກອບມີ:

1. ເອກະສານດ້ານນິຕິກຳ: ແມ່ນເອກະສານທາງດ້ານກົດໝາຍທີ່ດັດປັບສາຍພົວພັນສັງຄົມ, ມີຜົນບັງຄັບທົ່ວໄປ ຫຼື ມີຜົນບັງຄັບສະເພາະ, ຖືກສ້າງຂຶ້ນ, ຮັບຮອງ ແລະ ປະກາດໃຊ້ໂດຍອົງການທີ່ມີສິດອຳນາດຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ຊຶ່ງໄດ້ກຳນົດຢູ່ໃນມາດຕາ 101 ຂອງກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບປັບປຸງ ເລກທີ 06/ສພຊ ລົງວັນທີ 16 ພະຈິກ 2021 ແມ່ນກົດລະບຽບຂອງບ້ານ;

2. ເອກະສານທາງດ້ານບໍລິຫານ: ແມ່ນເອກະສານທີ່ນຳໃຊ້ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ນິຕິກຳ, ພົວພັນວຽກງານທາງລັດຖະການ ຊຶ່ງສ້າງຂຶ້ນໂດຍອົງການຈັດຕັ້ງ ເປັນຕົ້ນ: ແຜນການ, ບົດລາຍງານ, ບົດສະຫຼຸບ, ບົດບັນທຶກ, ໜັງສືສະເໜີ, ໜັງສືແຈ້ງຕອບ, ໜັງສືເຊີນ, ໃບມອບສິດ, ໃບຢັ້ງຢືນ, ໃບຮັບປະກັນ, ໃບຍົກຍ້າຍ, ແຈ້ງການ, ແຈ້ງຂ່າວ, ສະໂໜດນຳສົ່ງ;

3. ເອກະສານທີ່ເປັນຮ່າງຮູບແບບສະເພາະຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 28 ຫຼັກການ**

ເອກະສານຂອງອົງການປົກຄອງບ້ານຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ຂອບເຂດສິດ ຂອງຕົນ;
2. ຮັບປະກັນຄວາມເປັນເອກະພາບດ້ານຮູບແບບ ແລະ ເນື້ອໃນສະເພາະຂອງແຕ່ລະຊະນິດເອກະສານ;
3. ມີເນື້ອໃນຄົບຖ້ວນ, ຈະແຈ້ງ, ຮັດກຸມ ແລະ ເຂົ້າໃຈງ່າຍ.

**ມາດຕາ 29 ຜູ້ມີສິດເຊັນເອກະສານຂອງບ້ານ**

ຜູ້ມີສິດເຊັນເອກະສານຢູ່ຂັ້ນບ້ານແມ່ນນາຍບ້ານ ຫຼື ຮອງນາຍບ້ານຜູ້ທີ່ໄດ້ຮັບການມອບສິດຈາກນາຍບ້ານເທົ່ານັ້ນ.

**ມາດຕາ 30 ຮູບແບບຂອງເອກະສານ**

ເອກະສານຂອງບ້ານ ຕ້ອງຮັບປະກັນຄວາມຖືກຕ້ອງຕາມຮູບແບບ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍເອກະສານ ສະບັບເລກທີ 69/ສພຊ, ລົງວັນທີ 20 ມິຖຸນາ 2019 ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານເອກະສານ ທີ່ມີຜົນບັງຄັບໃຊ້ໃນເວລານັ້ນ ຫຼື ຕາມຮ່າງຂອງຂະແໜງການທີ່ກ່ຽວຂ້ອງມີແບບໄວ້ ຈະແມ່ນການຕີພິມ ຫຼື ຂຽນດ້ວຍມືກໍໄດ້.

**ມາດຕາ 31 ການຄຸ້ມຄອງເອກະສານຂອງບ້ານ**

ເອກະສານທັງໝົດຂອງບ້ານ ຕ້ອງບັນທຶກ ແລະ ຂຶ້ນບັນຊີເອກະສານ ຂາເຂົ້າ-ຂາອອກ ຢ່າງເປັນລະບົບ, ສາມາດຕິດຕາມ ແລະ ຊອກຄົ້ນໄດ້ງ່າຍ.

**ມາດຕາ 32 ຄ່າທຳນຽມ ແລະ ຄ່າບໍລິການເອກະສານ**

ຄ່າທຳນຽມ ແລະ ຄ່າບໍລິການເອກະສານ ຂອງອົງການປົກຄອງບ້ານ ໃຫ້ປະຕິບັດດັ່ງນີ້:

1. ປະຕິບັດຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ກຳນົດໃນແຕ່ລະໄລຍະ;

2. ປະຕິບັດຕາມການກຳນົດຂອງອົງການປົກຄອງຂັ້ນເມືອງ ບົນພື້ນຖານການປະສານສົມທົບ ແລະ ເອກະພາບຈາກບັນດາບ້ານ.

## ໝວດທີ 7
## ການເງິນບ້ານ ແລະ ລະບອບແບບແຜນວິທີເຮັດວຽກ

**ມາດຕາ 33 ການເງິນບ້ານ**

ການເງິນບ້ານ ໃຫ້ປະຕິບັດຕາມລະບຽບການຂອງກະຊວງການເງິນ.

**ມາດຕາ 34 ຫຼັກການ ແລະ ວິທີເຮັດວຽກ**

1. ເຮັດວຽກຕາມຫຼັກການ ລວມສູນປະຊາທິປະໄຕ ປະຕິບັດຕາມລະບອບຫົວໜ້າດຽວບົນພື້ນຖານການຕົກລົງຂອງກອງປະຊຸມ, ແບ່ງວຽກໃຫ້ບຸກຄົນຮັບຜິດຊອບ;

2. ເຮັດວຽກຢ່າງມີແຜນການ, ແຜນງານ, ໂຄງການ, ມີການກຳນົດເວລາ, ມີການຄິດໄລ່ ປະສິດທິຜົນ ໂດຍອີງຕາມຈຸດພິເສດ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ;

3. ຈັດຕັ້ງກົນໄກໃຫ້ມີລະບອບປະຈຳການ.

**ມາດຕາ 35 ການພົວພັນປະສານງານ**

1. ອົງການປົກຄອງບ້ານມີການພົວພັນ ແລະ ປະສານງານກັບ ການຈັດຕັ້ງທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານ; ໃນກໍລະນີບໍ່ເອກະພາບກັນໃນເລື່ອງໃດໜຶ່ງໃຫ້ນຳສະເໜີອົງການຈັດຕັ້ງຂັ້ນເທິງຖັດຕົນ ເພື່ອພິຈາລະນາຕົກລົງ;

2. ອົງການປົກຄອງບ້ານຢູ່ພາຍໃຕ້ການກວດກາກ່ຽວກັບການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນຈາກປະຊາຊົນ, ການກວດກາຈາກຂັ້ນຂອງຕົນ ແລະ ອົງການກວດກາຂອງຂັ້ນເທິງ ພ້ອມທັງສະຫຼຸບການລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

## ໝວດທີ 8
## ນາຍບ້ານທີ່ມາຈາກ ລັດຖະກອນ, ທະຫານ, ຕຳຫຼວດ

**ມາດຕາ 36 ນາຍບ້ານທີ່ມາຈາກລັດຖະກອນ, ທະຫານ, ຕຳຫຼວດ**

ນາຍບ້ານທີ່ມາຈາກລັດຖະກອນ, ທະຫານ, ຕຳຫຼວດທີ່ໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງໃຫ້ເປັນນາຍບ້ານ ຍັງມີຖານະເປັນລັດຖະກອນ, ທະຫານ, ຕຳຫຼວດຂຶ້ນກັບຂະແໜງການສາຍຕັ້ງຂອງຕົນເປັນປົກກະຕິ ພຽງແຕ່ໄດ້ໂຈະການປະຕິບັດໜ້າທີ່ເກົ່າໄວ້ຊົ່ວຄາວ ໃຫ້ມາປະຕິບັດພັນທະໜ້າທີ່ເປັນນາຍບ້ານ ຕາມການແຕ່ງຕັ້ງ ເພື່ອແກ້ໄຂບັນຫາສະເພາະຢູ່ໃນບ້ານດັ່ງກ່າວເທົ່ານັ້ນ.

**ມາດຕາ 37 ນະໂຍບາຍຂອງລັດ**

ນາຍບ້ານທີ່ມາຈາກລັດຖະກອນ, ທະຫານ, ຕຳຫຼວດທີ່ໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງ ຍັງໄດ້ຮັບເງິນເດືອນ, ປີການ ແລະ ການເລື່ອນຊັ້ນ-ຂັ້ນເງິນເດືອນຕາມປົກກະຕິ, ຮັກສາ ແລະ ໄດ້ຮັບເງິນອຸດໜູນຕຳແໜ່ງບໍລິຫານຄືເກົ່າ.

ຖ້າເປັນລັດຖະກອນວິຊາການ, ພົນທະຫານ, ພົນຕຳຫຼວດ ທີ່ມີອາຍຸການແຕ່ ແປດ ປີຂຶ້ນໄປ ໃຫ້ກົມກອງ

ເດີມ ຕົກລົງແຕ່ງຕັ້ງໃຫ້ດໍາລົງຕໍາແໜ່ງບໍລິຫານປະເພດ ແປດ ຫຼື ທຽບເທົ່າຕາມດໍາລັດສະບັບເລກທີ 203/ລບ, ລົງວັນທີ 04 ກໍລະກົດ 2017 ວ່າດ້ວຍຕໍາແໜ່ງບໍລິຫານຂອງພະນັກງານ-ລັດຖະກອນ.

ເມື່ອສິ້ນສຸດພັນທະເປັນນາຍບ້ານແລ້ວ ກໍໃຫ້ກັບຄືນສູ່ກົມກອງເດີມພ້ອມກັບຕໍາແໜ່ງບໍລິຫານທີ່ໄດ້ຮັບ.

**ມາດຕາ 38 ອາຍຸການດໍາລົງຕໍາແໜ່ງນາຍບ້ານທີ່ມາຈາກລັດຖະກອນ, ທະຫານ, ຕໍາຫຼວດ**

ອາຍຸການດໍາລົງຕໍາແໜ່ງນາຍບ້ານທີ່ມາຈາກລັດຖະກອນ, ທະຫານ, ຕໍາຫຼວດທີ່ໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງ ບໍ່ໃຫ້ເກີນ ສອງສະໄໝ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 39 ຕາປະທັບ ແລະ ເຄື່ອງແບບນາຍບ້ານ**

ອົງການປົກຄອງບ້ານມີຕາປະທັບຂອງຕົນ ເພື່ອນໍາໃຊ້ເຂົ້າໃນວຽກງານລັດຖະການ.

ສໍາລັບເຄື່ອງແບບນາຍບ້ານແມ່ນກໍານົດໃນລະບຽບການຕ່າງຫາກ.

**ມາດຕາ 40 ການຈັດຕັ້ງປະຕິບັດ**

1. ກົມການປົກຄອງທ້ອງຖິ່ນ ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ, ແນະນໍາ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;

2. ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບກັນ;

3. ພະແນກພາຍໃນ, ຫ້ອງການພາຍໃນ, ອົງການປົກຄອງບ້ານ ຈົ່ງຮັບຮູ້ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 41 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບເລກທີ 649/ພນ, ລົງວັນທີ 24 ສິງຫາ 2016 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ ແລະ ຂໍ້ຕົກລົງສະບັບເລກທີ 647/ພນ, ລົງວັນທີ 24 ສິງຫາ 2016 ວ່າດ້ວຍ ການອອກເອກະສານທາງການຂອງອົງການປົກຄອງບ້ານ.

ລັດຖະມົນຕີ

ປອ. ທອງຈັນ ມະນີໄຊ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ,ເທດສະບານ,ນະຄອນ

ບ້ານ..............

ເລກທີ ...../.......

ວັນທີ............................

## (ຮ່າງຕົວຢ່າງ) ຂໍ້ຕົກລົງ
## ວ່າດ້ວຍການແຕ່ງຕັ້ງອະນຸກຳມະການ
## ກະກຽມກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ ..........., ລົງວັນທີ..................;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ ສະບັບເລກທີ..... ລົງວັນທີ ............;
- ອີງຕາມ.........................................................................................

## ນາຍບ້ານ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງອະນຸກາມະການກະກຽມກອງປະຊຸມປ່ອນບັດຄັດເລືອກຕັ້ງຄະນະອົງການປົກຄອງບ້ານດັ່ງມີລາຍຊື່ລຸ່ມນີ້:

1. ອະນຸກຳມະການດ້ານເນື້ອໃນ
   1) ທ່ານ..................
   2) ທ່ານ..................
2. ອະນຸກຳມະການປ້ອງກັນຄວາມສະຫງົບ
   1) ທ່ານ..................
   2) ທ່ານ..................
3. ອະນຸກຳມະການຂະບວນການ
   1) ທ່ານ.................
   2) ທ່ານ.................
4. ອະນຸກຳມະການພິທີການ, ສະຖານທີ່ ແລະ ຮັບແຂກ
   1) ທ່ານ.................
   2) ທ່ານ.................
5. ອະນຸກຳມະການເສດຖະກິດ
   1) ທ່ານ..................
   2) ທ່ານ..................

6. ອະນຸກຳມະການຄົ້ນຄວ້າການແຂ່ງຂັນ ແລະ ຍ້ອງຍໍ
   1) ທ່ານ..................
   2) ທ່ານ.................

**ມາດຕາ 2** ໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະອະນຸກຳມະການມີດັ່ງນີ້:

1. ອະນຸກຳມະການເນື້ອໃນ ມີໜ້າທີ່ຄວາມຮັບຜິດຊອບຄື:

   ເຮັດບົດສະຫຼຸບ, ແຜນການ, ວາລະດຳເນີນກອງປະຊຸມ, ບົດກ່າວຈຸດປະສົງ ແລະ ຕ້ອນຮັບແຂກ, ບົດກ່າວເປີດກ່າວປິດ, ບົດຄອບຄົວຕົວແບບ, ໃບສະເໜີ, ບັດເຊີນຜູ້ແທນເຂົ້າຮ່ວມກອງປະຊຸມ ແລະ ເນື້ອໃນເອກະສານຕ່າງໆທີ່ຈະມາສະເໜີໃນກອງປະຊຸມຄັ້ງນີ້ ຊຶ່ງຮູບແບບ ແລະ ລາຍລະອຽດເອກະສານຕ່າງໆ ແມ່ນມີຄັດຕິດມາພ້ອມ.

2. ອະນຸກຳມະການປ້ອງກັນຄວາມສະຫງົບ ມີໜ້າທີ່ຄວາມຮັບຜິດຊອບຄື:

   ວາງແຜນປ້ອງກັນຄວາມສະຫງົບຮອບດ້ານ, ປ້ອງກັນບໍ່ໃຫ້ມີອັກຄີໄພຕ່າງໆ, ນັກເລງອັນຕະພານຂີ້ລັກງັດແງະ, ລັກເລັກຂະໂມຍນ້ອຍ, ການຜິດຖຽງ, ອາລະວາດຕີກັນ ແລະ ສິ່ງອື່ນທີ່ຈະບໍ່ດີເກີດຂຶ້ນໃນບ້ານຂອງຕົນ.

3. ອະນຸກຳມະການຂະບວນການ ມີໜ້າທີ່ຄວາມຮັບຜິດຊອບຄື:

   ສ້າງຂະບວນການຕ່າງໆເຊັ່ນ: ອະນາໄມລວມບ້ານ, ປະດັບປະດາບ້ານໃຫ້ສວຍງາມ, ສ້າງຂະບວນການກິລາ, ວັນນະຄະດີ ແລະ ອື່ນໆ ໃຫ້ມີຂະບວນການຟົດຟື້ນ.

4. ອະນຸກຳມະການພິທີການ, ສະຖານທີ່ ແລະ ຮັບແຂກ ມີໜ້າທີ່ຄວາມຮັບຜິດຊອບຄື:

   ຈັດສະຖານທີ່ບ່ອນປະຊຸມ, ອະນາໄມສະຖານທີ່ປະຊຸມ, ຈັດບ່ອນຮັບແຂກຂັ້ນເທິງເວລາລໍຖ້າເຂົ້າຫ້ອງປະຊຸມ, ກະກຽມເຄື່ອງຮັບໃຊ້ທີ່ຈຳເປັນ ເພື່ອຮັບແຂກ, ນ້ຳດື່ມອາຫານຫວ່າງ, ປະດັບປະດາສະຖານທີ່ບ່ອນປະຊຸມ, ໂຕະຄະນະປະທານ, ຄຳຂັວນ, ເຄື່ອງສຽງ, ປ້າຍຊື່ຄະນະປະທານພ້ອມແຂກຖືກເຊີນ ແລະ ວຽກອື່ນທີ່ຮັບໃຊ້ໃນຫ້ອງປະຊຸມ.

5. ອະນຸກຳມະການເສດຖະກິດ ມີໜ້າທີ່ຄວາມຮັບຜິດຊອບຄື:

   ຄົ້ນຄວ້າ ງົບປະມານຂອງບ້ານເພື່ອຈັດຊື້ອຸປະກອນ ແລະ ອາຫານການກິນເພື່ອຮັບໃຊ້ກອງປະຊຸມໃຫ້ພຽງພໍດ້ວຍຮູບການນຳໃຊ້ເງິນຄັງຂອງບ້ານ, ຮິບໂຮມຈາກປັດໃຈຂອງຊາວບ້ານ, ສ້າງງົບປະມານເພື່ອສະເໜີໃຫ້ຂັ້ນເທິງ ຫຼື ຖ້າມີເງື່ອນໄຂອາດຈະຂໍອຸປະຖຳນຳພາກສ່ວນນັກທຸລະກິດຕ່າງໆຕາມເງື່ອນໄຂຕົວຈິງ.

6. ອະນຸກຳມະການຄົ້ນຄວ້າການແຂ່ງຂັນ ແລະ ຍ້ອງຍໍ ມີໜ້າທີ່ຄວາມຮັບຜິດຊອບຄື:

   ຄົ້ນຄວ້າຄັດເລືອກບຸກຄົນ ແລະ ຄອບຄົວດີເດັ່ນເພື່ອລາຍງານຕໍ່ກອງປະຊຸມ, ສະເໜີການຍ້ອງຍໍຕ່າງໆໃຫ້ຖືກຕ້ອງ ແລະ ຊັດເຈນ ເພື່ອຫຼີກເວັ້ນທາງສຽງວິພາກວິຈານຈາກປະຊາຊົນ ເພື່ອສະເໜີໃຫ້ອຳນາດການປົກຄອງບ້ານ ພິຈາລະນາຕົກລົງ ແລະ ສະເໜີຂັ້ນເທິງຕົກລົງຮັບຮອງ.

**ມາດຕາ 3** ມອບໃຫ້ບັນດາທ່ານທີ່ມີລາຍຊື່ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງພ້ອມກັນຈັດຕັ້ງປະຕິບັດໃຫ້ທັນເວລາ ແລະ ມີປະສິດທິຜົນ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍບ້ານ**

ບ່ອນນຳສົ່ງ
1. ຜູ້ມີລາຍຊື່ຜູ້ລະສະບັບ
2. ສຳເນົາ 1 ສະບັບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງ,ເທດສະບານ,ນະຄອນ

ບ້ານ.............. ເລກທີ ...../.......

ວັນທີ.............................

## (ຮ່າງຕົວຢ່າງ) ໜັງສືສະເໜີ

**ຮຽນ: ທ່ານ........................(ຫົວໜ້າອົງການປົກຄອງຂັ້ນເມືອງ) ທີ່ເຄົາລົບນັບຖື.**

**ເລື່ອງ: ຂໍການອະນຸມັດເປີດກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ.**

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ ..........., ລົງວັນທີ.................;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານສະບັບເລກທີ..... ລົງວັນທີ .........;
- ອີງຕາມ ສະໄໝການດຳລົງຕຳແໜ່ງຂອງນາຍບ້ານ ແລະ ຄະນະຊຸດເກົ່າ (ຫຼື ສະພາບຄວາມຈຳເປັນຂອງບ້ານໃນປັດຈຸບັນ).

ເພື່ອເຮັດໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການປົກຄອງບ້ານມີປະສິດທິພາບ ແລະ ມີຄວາມຕໍ່ເນື່ອງ ນາຍບ້ານ ບ້ານ......................................................................ຈຶ່ງຖືເປັນກຽດຮຽນສະເໜີມາຍັງ..................................... (ຫົວໜ້າອົງການປົກຄອງຂັ້ນເມືອງ) ເພື່ອຂໍອະນຸມັດເປີດກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ ຊຶ່ງຈະຈັດຂຶ້ນໃນວັນທີ.........ເດືອນ..............ປີ.................

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາ ແລະ ອະນຸມັດຕາມທາງຄວນດ້ວຍ.

**ນາຍບ້ານ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງ,ເທດສະບານ,ນະຄອນ

ບ້ານ.............. ເລກທີ ...../.......

ວັນທີ.............................

## (ຮ່າງຕົວຢ່າງ) ໜັງສືເຊີນ

**ຮຽນ: ທ່ານ........................................... ທີ່ເຄົາລົບນັບຖື.**

**ເລື່ອງ: .........................................................................**

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ .......... ລົງວັນທີ..................;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ ສະບັບເລກທີ...., ລົງວັນທີ ......;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການອະນຸມັດເປີດກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ ສະບັບເລກທີ......., ລົງວັນທີ.........

ເນື່ອງໃນໂອກາດບ້ານ...........................ຈະໄດ້ເປີດກອງປະຊຸມຂຶ້ນ ເພື່ອປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ ແລະ ຄັດເລືອກຄະນະອົງການປົກຄອງບ້ານຊຸດໃໝ່. ນາຍບ້ານ ບ້ານ.......................ຂໍຖືເປັນກຽດຮຽນເຊີນທ່ານ.........................ເພື່ອເຂົ້າຮ່ວມກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ ຊຶ່ງຈະໄດ້ຈັດຂຶ້ນທີ່..................ເວລາ..........ໂມງຫາ..........ໂມງ ຂອງວັນທີ......ເດືອນ.......ປີ....... ພາຍໃຕ້ການເຂົ້າຮ່ວມຂອງທ່ານ..............................(ຫົວໜ້າອົງການປົກຄອງຂັ້ນເມືອງ ຫຼື ຜູ້ຕາງໜ້າຈາກຂັ້ນເມືອງ)

ດັ່ງນັ້ນ, ຈຶ່ງເຊີນມາຍັງທ່ານເພື່ອ.........................................................................

ຫວັງຢ່າງຍິ່ງວ່າທ່ານ ຈະສະຫຼະເວລາອັນມີຄ່າເຂົ້າຮ່ວມຕາມການເຊີນດ້ວຍ.

**ນາຍບ້ານ**

## (ຮ່າງຕົວຢ່າງ) ວາລະດຳເນີນກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ

ບ້ານ.......................ວັນທີ........ເດືອນ........ປີ..........

| ລດ | ເວລາ | ເນື້ອໃນ | ຜູ້ຮັບຜິດຊອບ |
|---|---|---|---|
| 1 | | | |
| 2 | | | |
| 3 | | | |
| | | | |
| | | | |
| | | | |

## (ຮ່າງຕົວຢ່າງ) ໃບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມ

ບ້ານ.......................ວັນທີ........ເດືອນ........ປີ..........

| ລດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ມາຈາກພາກສ່ວນ | ເບີໂທ | ລາຍເຊັນ |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| | | | | | |
| | | | | | |
| | | | | | |

## (ຮ່າງຕົວຢ່າງ) ໃບລົງທະບຽນຮັບບັດເລືອກຕັ້ງ

ບ້ານ.......................ວັນທີ........ເດືອນ........ປີ..........

| ລດ | ຊື່ ແລະ ນາມສະກຸນ | ໜ່ວຍ | ເລກທີສຳມະໂນຄົວ | ເລກທີບັດປະຈຳໂຕ | ເຊັນຮັບບັດ |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| | | | | | |
| | | | | | |
| | | | | | |

(ຮ່າງຕົວຢ່າງ) ປົດກ່າວຈຸດປະສົງ ແລະ ສະເໜີແຂກ

ຮຽນ: ທ່ານ..................

ຮຽນ: ຄະນະປະທານທີ່ນັບຖື.

ບັນດາແຂກທ່ານຍິງ ແລະ ທ່ານຊາຍທີ່ຮັກແພງ.

ທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວປວງຊົນ, ທົ່ວກອງທັບພວມເບີກບານມ່ວນຊື່ນ ແລະ ພ້ອມກັນສ້າງຜົນງານ ເພື່ອຂໍ່ານັບຮັບຕ້ອນວັນສໍາຄັນຕ່າງໆຢ່າງເປັນຂະບວນຟົດຟື້ນ ແລະ ປະຊາຊົນບັນດາເຜົ່າພາຍໃນບ້ານຂອງພວກເຮົາກໍ່ພວມແຂ່ງຂັນກັນສ້າງຜົນງານ ເພື່ອຕ້ອນຮັບກອງປະຊຸມ ປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານຂອງບ້ານ................................

ມື້ນີ້, ພວກເຮົາໄດ້ເຊີນບັນດາທ່ານເຂົ້າມາໂຮມຊຸມນຸມຢູ່ສະຖານທີ່ແຫ່ງນີ້ ເພື່ອເຂົ້າຮ່ວມກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານຊຸດໃໝ່ ເນື່ອງຈາກວ່າ: ສະໄໝການດໍາລົງຕໍາແໜ່ງຂອງນາຍບ້ານ ແລະ ຄະນະຊຸດເກົ່າກໍາລັງຈະໝົດສະໄໝ (ຫຼື ສະພາບຄວາມຈໍາເປັນຂອງບ້ານໃນປັດຈຸບັນ).

ໃນກອງປະຊຸມທີ່ມີຄວາມໝາຍຄວາມສໍາຄັນຄັ້ງນີ້, ໄດ້ໃຫ້ກຽດເຂົ້າຮ່ວມ ແລະ ເປັນປະທານໂດຍ:
ທ່ານ.......(ຫົວໜ້າອົງການປົກຄອງຂັ້ນເມືອງ ຫຼື ຜູ້ຕາງໜ້າຈາກຂັ້ນເມືອງ).(ຊົມເຊີຍ)
ທ່ານ.........ເລຂາໜ່ວຍພັກບ້ານ ນາຍບ້ານ ບ້ານ...................ກໍ່ໃຫ້ກຽດເຂົ້າຮ່ວມ.(ຊົມເຊີຍ)
ທ່ານ........ນາຍບ້ານ ບ້ານ............ກໍ່ໃຫ້ກຽດເຂົ້າຮ່ວມ (ກໍລະນີເລຂາໜ່ວຍພັກບ້ານບໍ່ຄວບນາຍບ້ານ).(ຊົມເຊີຍ)
ມີຜູ້ຕາງໜ້າຈາກ: -........................

-........................

-........................ ກໍ່ມີໜ້າເຂົ້າຮ່ວມ (ຊົມເຊີຍ)

ຕໍ່ໄປນີ້, ຂ້າພະເຈົ້າຂໍຜ່ານຂໍ້ຕົກລົງຂອງຫົວໜ້າອົງການປົກຄອງຂັ້ນເມືອງວ່າດ້ວຍ ການອະນຸຍາດເປີດກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ.

ເພື່ອເຮັດໃຫ້ກອງປະຊຸມຄັ້ງນີ້ມີຄວາມໝາຍ ຂໍຮຽນເຊີນປະທານກອງປະຊຸມມີຄໍາເຫັນກ່າວເປີດກອງປະຊຸມ ແລະ ເປັນປະທານຊີ້ນໍາກອງປະຊຸມຄັ້ງນີ້ດ້ວຍ.

## (ຮ່າງຕົວຢ່າງ) ບົດກ່າວເປີດກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ

**ຮຽນ: ................ (ຫົວໜ້າອົງການປົກຄອງຂັ້ນເມືອງ ຫຼື ຜູ້ຕາງໜ້າຈາກຂັ້ນເມືອງ)ທີ່ນັບຖື.**
**ບັນດາທ່ານຜູ້ແທນກອງປະຊຸມ, ແຂກທີ່ມີກຽດ ແລະ ປະຊາຊົນບັນດາເຜົ່າທີ່ຮັກແພງ.**

ດັ່ງທີ່ເຮົາຮູ້ນຳກັນແລ້ວວ່າ ພັກ-ລັດຖະບານຂອງພວກເຮົາ ຍາມໃດກໍຍຶດຖືເອົາວຽກງານຢູ່ຮາກຖານເປັນສຳຄັນໂດຍສະເພາະຜູ້ທີ່ເຮັດໜ້າທີ່ນຳພາປະຊາຊົນບັນດາເຜົ່າໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະ ນະໂຍບາຍຂອງລັດຖະບານໃນແຕ່ລະໄລຍະ ໃຫ້ເກີດໝາກເກີດຜົນ; ຜູ້ທີ່ເຮັດໜ້າທີ່ດັ່ງກ່າວນັ້ນກໍຄືນາຍບ້ານ ແລະ ຄະນະອົງການປົກຄອງບ້ານ ຊຶ່ງເປັນທັງຕົວແທນຂອງປະຊາຊົນບັນດາເຜົ່າ ແລະ ຕາງໜ້າໃຫ້ພັກໃຫ້ລັດ ທີ່ໄດ້ຮັບມອບໝາຍໜ້າທີ່ຕາມລະບຽບກົດໝາຍ ໃນການຈັດຕັ້ງເຄື່ອນໄຫວວຽກງານຕ່າງໆພາຍໃນບ້ານຕາມຂອບເຂດສິດຂອງຕົນ. ສະນັ້ນ, ອີງໃສ່ສະໄໝການດຳລົງຕຳແໜ່ງຂອງນາຍບ້ານ ແລະ ຄະນະຊຸດເກົ່າ (ຫຼື ສະພາບຄວາມຈຳເປັນຂອງບ້ານໃນປັດຈຸບັນ), ບ້ານ...............ຈຶ່ງໄດ້ເປີດກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານຂຶ້ນໃນມື້ນີ້.

ນະໂອກາດທີ່ມີຄວາມໝາຍສຳຄັນນີ້ ກອງປະຊຸມພວກເຮົາຖືເປັນກຽດຢ່າງສູງຂໍນັບຮັບຕ້ອນທ່ານ............ (ຫົວໜ້າອົງການປົກຄອງຂັ້ນເມືອງ ຫຼື ຜູ້ຕາງໜ້າຈາກຂັ້ນເມືອງ) ທີ່ໄດ້ເຂົ້າຮ່ວມ ແລະ ເປັນປະທານຮ່ວມຊີ້ນຳກອງປະຊຸມໃນຄັ້ງນີ້.

**ຮຽນບັນດາທ່ານທີ່ນັບຖືຮັກແພງ.**

ກອງປະຊຸມຂອງພວກເຮົາຄັ້ງນີ້ຈະໄດ້ດຳເນີນເປັນເວລາ....ວັນ, ຕະຫຼອດໄລຍະເວລາດັ່ງກ່າວພວກເຮົາຈະໄດ້ພ້ອມກັນສັງເກດຕີລາຄາຄືນກ່ຽວກັບການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ເພື່ອຊອກໃຫ້ເຫັນຜົນງານທີ່ພົ້ນເດັ່ນຈຸດອ່ອນຄົງຄ້າງ, ບັນດາສາເຫດ ແລະ ບົດຮຽນຖອດຖອນໄດ້ຈາກການຈັດຕັ້ງປະຕິບັດໃນຕົວຈິງຊຸມປີຜ່ານມາ. ພ້ອມກັນນັ້ນ, ກໍ່ຈະໄດ້ຄົ້ນຄວ້າກຳນົດທິດທາງໜ້າທີ່ ແລະ ຄາດໝາຍສູ້ຊົນແຕ່ລະວຽກງານຂອງບ້ານໃນໄລຍະຕໍ່ໜ້າ. ເພື່ອຍົກລະດັບຄວາມສາມາດໃນການພັດທະນາ ແລະ ການຄຸ້ມຄອງບໍລິຫານບ້ານພວກເຮົາໃຫ້ສູງຂຶ້ນເທື່ອລະກ້າວ.

ພ້ອມກັນນີ້, ພວກເຮົາຍັງໄດ້ໃຊ້ສິດປະຊາທິປະໄຕ ປ່ອນບັດເລືອກຕັ້ງເອົາຄະນະອົງການປົກຄອງບ້ານຊຸດໃໝ່ ເພື່ອເປັນຫຼັກແຫຼ່ງໃນດ້ານຊີ້ນຳ-ນຳພາ ຈັດຕັ້ງປະຕິບັດທາງໜ້າທີ່ ແລະ ຄາດໝາຍສູ້ຊົນທີ່ກອງປະຊຸມຄັ້ງນີ້ໄດ້ຮັບຮອງເອົາ ໃຫ້ປະກົດຜົນເປັນຈິງ, ທັງເປັນໃຈກາງເຕົ້າໂຮມຄວາມສາມັກຄີຂອງປະຊາຊົນຊົນບັນດາເຜົ່າຢູ່ພາຍໃນບ້ານໃຫ້ໜັກແໜ້ນ. ບັນດາເນື້ອໃນທັງໝົດທີ່ກອງປະຊຸມຄັ້ງນີ້ຈະໄດ້ຄົ້ນຄວ້າ ແລະ ຮັບຮອງເອົານັ້ນລ້ວນແຕ່ແມ່ນບັນຫາທີ່ມີຄວາມສຳຄັນ ຕັດສິນຕໍ່ການເຕີບໃຫຍ່ຂະຫຍາຍຕົວຂອງບ້ານເຮົາໃນຕໍ່ໜ້າ.

ສະນັ້ນ, ຂ້າພະເຈົ້າຈຶ່ງຮຽກຮ້ອງມາຍັງບັນດາທ່ານ, ຜູ້ແທນກອງປະຊຸມ ແລະ ປະຊາຊົນບັນດາເຜົ່າ ຈົ່ງຍົກສູງຄວາມຮັບຜິດຊອບ ເຮັດໃຫ້ກອງປະຊຸມປະສົບຜົນສຳເລັດຢ່າງຈົບງາມ.

ຂໍອວຍພອນໃຫ້ຄະນະປະທານກອງປະຊຸມ, ບັນດາທ່ານ, ແຂກທີ່ມີກຽດ ແລະ ປະຊາຊົນບັນດາເຜົ່າ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນຊີວິດທຸກປະການ.

ໃນນາມຄະນະປະທານກອງປະຊຸມ ຂ້າພະເຈົ້າຂໍປະກາດເປີດກອງປະຊຸມປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.

**ຂໍຂອບໃຈ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງ,ເທດສະບານ,ນະຄອນ

ບ້ານ.............. ເລກທີ ..../.....

ວັນທີ.............................

## (ຮ່າງຕົວຢ່າງ) ບົດສະຫຼູບ ແລະ ແຜນການຂອງບ້ານ

- ອີງຕາມ ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ........, ລົງວັນທີ..............;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ ສະບັບເລກທີ...... ລົງວັນທີ ............;
- ອີງຕາມ ..........................................................................................

### I. ສະພາບໃນໄລຍະຜ່ານມາ

1. ສະພາບລວມຂອງບ້ານ
   1) ທີ່ຕັ້ງ ພູມສັນຖານ
   2) ພົນລະເມືອງ, ຫຼັງຄາເຮືອນ
   3) ການປະກອບອາຊີບ
   4) .............
2. ຕີລາຄາການຈັດຕັ້ງປະຕິບັດວຽກງານຮອບດ້ານໄລຍະຜ່ານມາ
   1) ດ້ານວຽກງານບໍລິຫານ-ການປົກຄອງ
   2) ດ້ານວຽກງານພັກ-ອົງການຈັດຕັ້ງມະຫາຊົນ
   3) ດ້ານວຽກງານເສດຖະກິດ-ການເງິນ
   4) ດ້ານວຽກງານວັດທະນະທຳ-ສັງຄົມ
   5) ດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

### II. ສະພາບດ້ານດີ ແລະ ບັນຫາຄົງຄ້າງ

1. ດ້ານດີ ແລະ ຂໍ້ຄົງຄ້າງ
2. ສາເຫດທີ່ພາໃຫ້ມີດ້ານດີ ແລະ ຂໍ້ຄົງຄ້າງ
3. ບົດຮຽນທີ່ຖອດຖອນໄດ້

### III. ທິດທາງແຜນການ ແລະ ຄາດໝາຍສູ້ຊົນໃນຕໍ່ໜ້າ

1. ທິດທາງ ແລະ ຄາດໝາຍສູ້ຊົນລວມ
2. ການພັດທະນາຕາມແຕ່ລະຂົງເຂດວຽກງານ
   1) ດ້ານວຽກງານບໍລິຫານ-ການປົກຄອງ

2) ດ້ານວຽກງານພັກ-ອົງການຈັດຕັ້ງມະຫາຊົນ
3) ດ້ານວຽກງານເສດຖະກິດ-ການເງິນ
4) ດ້ານວຽກງານວັດທະນະທຳ-ສັງຄົມ
5) ດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

## IV. ຂໍ້ສະເໜີ

1. …………..
2. ………….

**ນາຍບ້ານ**

ບ່ອນນຳສົ່ງ:

1. ………………
2. ………………

## (ຮ່າງຕົວຢ່າງ) ບົດກ່າວລາໜ້າທີ່ຂອງນາຍບ້ານ

**ຮຽນ: ຄະນະປະທານກອງປະຊຸມ ທີ່ນັບຖື**
**ບັນດາທ່ານ ຜູ້ແທນກອງປະຊຸມ, ແຂກຜູ້ມີກຽດ ທີ່ຮັກແພງທັງຫຼາຍ**

ນັບແຕ່ພວກຂ້າພະເຈົ້າໄດ້ຄວາມໄວ້ວາງໃຈເຂົ້າມາຮັບເປັນຄະນະອົງການປົກຄອງບ້ານ ແລະ ປະຕິບັດໜ້າທີ່ຕາມພາລະບົດບາດຂອງຕົນ ໃນການນຳພາ ແລະ ບໍລິຫານບ້ານ ຈົນມາຮອດປັດຈຸບັນ ເປັນເວລາ................; ຕະຫຼອດໄລຍະດັ່ງກ່າວ ພວກຂ້າພະເຈົ້າໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມສາມາດເຂົ້າໃນການຊີ້ນຳ-ນຳພາ ຄຸ້ມຄອງບໍລິຫານບ້ານ ເພື່ອຮັບໃຊ້ບໍລິການໃຫ້ປະຊາຊົນບັນດາເຜົ່າມີຄວາມສະດວກສະບາຍ ກໍຄືປະຕິບັດໄດ້ຕາມແນວທາງນະໂຍບາຍຂອງພັກລັດທີ່ວາງອອກ ເຮັດໃຫ້ບ້ານມີລະດັບການພັດທະນາທີ່ດີຂຶ້ນ ຊຶ່ງສະແດງເຖິງຜົນງານທີ່ມີຜົນສຳເລັດຂອງພວກເຮົາ ແຕ່ເຖິງຢ່າງໃດກໍຕາມຄຽງຄູ່ກັນນັ້ນການປະຕິບັດໜ້າທີ່ດັ່ງກ່າວກໍຍັງມີຈຸດອ່ອນທີ່ຄົງຄ້າງທີ່ຄະນະພວກເຮົາຕ້ອງໄດ້ຮັບຜິດຊອບນຳກັນ ເພື່ອກຳນົດທິດທາງແກ້ໄຂ ຊຶ່ງໄດ້ເວົ້າແລ້ວໃນບົດສະຫຼຸບທີ່ຂ້າພະເຈົ້າໄດ້ລາຍງານ.

ມາຮອດປັດຈຸບັນ ວາລະການປະຕິບັດໜ້າທີ່ຂອງພວກເຮົາໄດ້ຄົບຕາມທີ່ກຳນົດໄວ້ແລ້ວ. ສະນັ້ນ, ພວກຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງສູງມາຍັງການຈັດຕັ້ງທຸກພາກສ່ວນ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າທີ່ເຊື່ອໝັ້ນ, ໄວ້ວາງໃຈ ແລະ ໃຫ້ການຮ່ວມມືສະໜັບສະໜູນທາງຄະນະພວກເຮົາຕະຫຼອດໄລຍະຜ່ານມາ ຈົນເຮັດໃຫ້ບ້ານຂອງພວກເຮົາມີຜົນສຳເລັດຫຼາຍດ້ານ.

ນະໂອກາດທີ່ມີຄວາມໝາຍນີ້ ພວກຂ້າພະເຈົ້າ ຊຶ່ງເປັນຄະນະອົງການປົກຄອງບ້ານ ຈຶ່ງຂໍລາໜ້າທີ່ຢ່າງເປັນທາງການ ແລະ ມອບໃຫ້ກອງປະຊຸມຄັ້ງນີ້ຄົ້ນຄວ້າ ເລືອກເອົາຄະນະຊຸດໃໝ່ ເພື່ອມາສືບຕໍ່ປະຕິບັດວຽກງານຂອງບ້ານຕໍ່ໄປ.

**ຂໍຂອບໃຈ**

## (ຮ່າງຕົວຢ່າງ)ຮັບຄຳໂອວາດຂອງນາຍບ້ານ

**ຮຽນ: ຄະນະປະທານກອງປະຊຸມ**
**ບັນດາທ່ານຜູ້ແທນກອງປະຊຸມ, ແຂກຜູ້ມີກຽດທີ່ຮັກແພງທັງຫຼາຍ**

ກອງປະຊຸມພວກເຮົາມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ຮັບກຽດຟັງການໂອ້ລົມຂອງທ່ານ.............. ຊຶ່ງທ່ານໄດ້ສະແດງຄວາມເປັນຫ່ວງເປັນໃຍຕໍ່ບ້ານພວກເຮົາ ແລະ ມີຄຳເຫັນຊີ້ນຳຫຼາຍບັນຫາທີ່ມີຄວາມສຳຄັນ ແລະ ເປັນປະໂຫຍດຢ່າງໃຫຍ່ຫຼວງໃຫ້ແກ່ອົງການປົກຄອງບ້ານຊຸດໃໝ່ຂອງພວກເຮົາ; ຄຳຄິດເຫັນຂອງທ່ານນັ້ນໄດ້ເປັນແນວທາງ, ເປັນວິໄສທັດທີ່ກວ້າງໄກໃຫ້ແກ່ພວກເຮົາໃນການປະຕິບັດແຜນການ ແລະ ທິດທາງຂອງບ້ານຊຶ່ງພວກຂ້າພະເຈົ້າ ຈະນຳເອົາໄປເປັນບົດຮຽນ, ໄປຄົ້ນຄວ້າໝູນໃຊ້ໃນການຊີ້ນຳ-ນຳພາຈັດຕັ້ງປະຕິບັດວຽກງານຕົວຈິງແຕ່ລະດ້ານຂອງບ້ານໃນຊຸມປີຕໍ່ໜ້າໃຫ້ປະສົບຜົນສຳເລັດຢ່າງເປັນຮູບປະທຳ.

ຂໍສະແດງຄວາມຂອບອົກຂອບໃຈ ແລະ ອວຍພອນໄຊ ໃຫ້ແກ່ທ່ານ .................................... ຈົ່ງມີສຸຂະພາບເຂັ້ມແຂງມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານຂອງທ່ານທຸກປະການ.

ຂໍອວຍພອນໃຫ້ຄະນະປະທານ, ຜູ້ແທນກອງປະຊຸມ, ແຂກຜູ້ມີກຽດຈົ່ງມີແຕ່ສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານ.

**ຂໍຂອບໃຈ**

## (ຮ່າງຕົວຢ່າງ) ບົດກ່າວຮັບໜ້າທີ່ນາຍບ້ານ

**ຮຽນ: ຄະນະປະທານກອງປະຊຸມທີ່ນັບຖື**
**ບັນດາສະຫາຍຜູ້ແທນ, ແຂກຜູ້ມີກຽດ ທີ່ຮັກແພງທັງຫຼາຍ**

ນັບວ່າເປັນກຽດອັນສູງສົ່ງ ແລະ ຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ພວກຂ້າພະເຈົ້າໄດ້ຮັບຄວາມເຊື່ອໝັ້ນ, ຄວາມໄວ້ວາງໃຈຕໍ່ການຈັດຕັ້ງພັກ - ລັດຂັ້ນເທິງ ກໍ່ຄືປະຊາຊົນບັນດາເຜົ່າພາຍໃນບ້ານ ເລືອກເອົາພວກຂ້າພະເຈົ້າມາຮັບໜ້າທີ່ເປັນຄະນະອົງການປົກຄອງບ້ານ ບ້ານ…………… ຊຸດໃໝ່ ເພື່ອສືບຕໍ່ນຳພາຈັດຕັ້ງປະຕິບັດ ທິດທາງ, ຄາດໝາຍສູ້ຊົນຂອງບ້ານໃນຕໍ່ໜ້າ.

ສະນັ້ນ, ໂອກາດອັນມີຄວາມໝາຍສຳຄັນນີ້ ຂ້າພະເຈົ້າຕາງໜ້າຄະນະອົງການປົກຄອງບ້ານຊຸດໃໝ່ຂໍຢືນຢັນຕໍ່ທີ່ປະຊຸມວ່າ ຈະເຮັດໜ້າທີ່ອັນມີກຽດທີ່ພັກລັດ, ປະຊາຊົນ ມອບໃຫ້ນີ້ ດ້ວຍຄວາມຊື່ສັດບໍລິສຸດ, ມີຄວາມໂປ່ງໃສຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ ແລະ ກົດໝາຍລັດ; ຕອບສະໜອງຄວາມມຸ່ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າໃຫ້ດີທີ່ສຸດ. ຈະສືບຕໍ່ນຳເອົາບົດຮຽນ ກໍ່ຄືຜົນງານອັນດີເດັ່ນຂອງຄະນະອົງການປົກຄອງບ້ານຊຸດເກົ່າໄດ້ສ້າງໄວ້ມາພັນຂະຫຍາຍໃຫ້ກວ້າງຂວາງຈະສູ້ຊົນປັບປຸງແກ້ໄຂບັນດາຈຸດອ່ອນຂໍ້ຄົງຄ້າງຕ່າງໆ ເພື່ອຮັບປະກັນໃຫ້ແກ່ການນຳພາການຈັດຕັ້ງປະຕິບັດທິດທາງ ແລະ ຄາດໝາຍສູ້ຊົນຂອງບ້ານໃນຕໍ່ໜ້າໃຫ້ສຳເລັດຜົນຢ່າງເປັນຮູບປະທຳ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງພວກຂ້າພະເຈົ້າມີປະສິດທິພາບ ແລະ ຖືກຕ້ອງສອດຄ່ອງ ຈຶ່ງຂໍຮຽກຮ້ອງມາຍັງຄະນະພັກຂັ້ນເມືອງ, ບັນດາການຈັດຕັ້ງຂະແໜງການຕ່າງໆຂັ້ນເມືອງ ຈົ່ງໃຫ້ການຊ່ວຍເຫຼືອ, ຊີ້ນຳ-ນຳພາໃຫ້ ແກ່ຄະນະອົງການປົກຄອງບ້ານຊຸດໃໝ່ຂອງພວກເຮົາຢ່າງໃກ້ຊິດຕິດແທດຕື່ມອີກ.

ຂໍຮຽກຮ້ອງມາຍັງການຈັດຕັ້ງທຸກຂະແໜງການຂອງບ້ານ, ບັນດາເຖົ້າແກ່ແນວໂຮມ, ຜູ້ຊົງຄຸນວຸດທິ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນບ້ານ ຈົ່ງພ້ອມກັນປະກອບສ່ວນຢ່າງຫ້າວຫັນ, ມີຄວາມສາມັກຄີໃຫ້ການຮ່ວມມືເປັນຢ່າງດີກັບອຳນາດການປົກຄອງບ້ານ ເພື່ອພ້ອມກັນພັດທະນາ ແລະ ຈັດຕັ້ງປະຕິບັດທິດທາງ, ຄາດໝາຍສູ້ຊົນລວມຂອງບ້ານພວກເຮົາ ໃຫ້ສຳເລັດຜົນຕາມທີ່ວາງໄວ້.

ສຸດທ້າຍນີ້, ຂໍອວຍພອນໃຫ້ຄະນະປະທານກອງປະຊຸມ, ບັນດາທ່ານຜູ້ແທນ, ແຂກຜູ້ມີກຽດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນຊີວິດທຸກປະການ.

**ຂໍຂອບໃຈ**

## (ຮ່າງຕົວຢ່າງ) ບົດກ່າວປິດ

**ຮຽນ: ທ່ານ ................................................ ທີ່ນັບຖື**
**ບັນດາທ່ານ ຜູ້ແທນກອງປະຊຸມ, ແຂກຜູ້ມີກຽດ, ທີ່ນັບຖືຮັກແພງທັງຫຼາຍ**

ກອງປະຊຸມປ່ອນບັດເລືອກຕັ້ງຄະນະອຳນວຍການປົກຄອງບ້ານຂອງບ້ານ .............. ໄດ້ດຳເນີນມາເປັນເວລາ ...... ວັນ ດ້ວຍ ບັນຍາກາດຟົດຟື້ນ ແລະ ມີຄວາມຮັບຜິດຊອບສູງຂອງຜູ້ເຂົ້າຮ່ວມກອງປະຊຸມມາຮອດນີ້ໄດ້ສຳເລັດຜົນຢ່າງຈົບງາມ. ກອງປະຊຸມໄດ້ເປັນເອກະພາບຮັບຮອງເອົາຜົນການສະຫຼຸບສັງເກດຕີລາຄາຄືນ ການຈັດຕັ້ງປະຕິບັດວຽກງານຂອງບ້ານໃນໄລຍະຜ່ານມາ ແລະ ເຫັນດີເປັນເອກະພາບຕໍ່ກັບການກຳນົດທິດທາງໜ້າທີ່ຕົ້ນຕໍຂອງບ້ານໃນຕໍ່ໜ້າ.

ກອງປະຊຸມໄດ້ຮັບຮອງເອົາຜົນຂອງການປ່ອນບັດຄັດເລືອກຄະນະອຳນວຍການປົກຄອງບ້ານຊຸດໃໝ່ ທີ່ປະກອບໄປ ດ້ວຍບຸກຄົນທີ່ມີເງື່ອນໄຂ, ມາດຕະຖານອັນຄົບຖ້ວນຕາມໂຄງປະກອບກົງຈັກຂອງການບໍລິຫານຂັ້ນບ້ານ ເພື່ອຮັບປະກັນໃຫ້ແກ່ການນຳພາ, ຄຸ້ມຄອງບໍລິຫານວຽກງານຕ່າງໆຂອງບ້ານໃນຕໍ່ໜ້າໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ກອງປະຊຸມເລືອກຕັ້ງຄະນະອຳນວຍການປົກຄອງບ້ານ ......... ຄັ້ງນີ້ໄດ້ສຳເລັດຜົນຢ່າງຈົບງາມ ກໍຍ້ອນວ່າໄດ້ຮັບຄວາມເອົາໃຈໃສ່ ຊີ້ນຳ ຈາກບັນດາຂະແໜງການທີ່ກ່ຽວຂ້ອງຈາກຂັ້ນເມືອງ, ຄວາມຮັບຜິດຊອບ, ຄວາມເປັນເຈົ້າການຂອງຄະນະພັກອຳນາດການປົກຄອງບ້ານ ແລະ ການປະກອບສ່ວນຮ່ວມໄມ້ຮ່ວມມືຂອງປະຊາຊົນພາຍໃນບ້ານເປັນຢ່າງດີ.

ບັນດາທ່ານທີ່ນັບຖືຮັກແພງ.

ກອງປະຊຸມໃນມື້ນີ້ໄດ້ສຳເລັດຜົນຕາມຄາດໝາຍທຸກປະການ; ອີກເທື່ອໜຶ່ງ, ຂໍຂອບໃຈຢ່າງເລິກເຊິ່ງຕໍ່ທ່ານ........................ ທີ່ໄດ້ເຂົ້າຮ່ວມເປັນຄະນະປະທານໃຫ້ຄວາມອົບອຸ່ນ, ໃກ້ຊິດ ແລະ ຊີ້ນຳຕໍ່ກອງປະຊຸມ, ທັງໃຫ້ຄຳໂອວາດຕັກເຕືອນທີ່ເປັນປະໂຫຍດແກ່ຄະນະອຳນວຍການປົກຄອງບ້ານຊຸດໃໝ່ ໃນການສືບຕໍ່ນຳພາບໍລິຫານວຽກງານຂອງບ້ານ.

ກອງປະຊຸມຂໍສະແດງຄວາມຊົມເຊີຍ ແລະ ຂອບອົກຂອບໃຈຢ່າງສູງຕໍ່ບັນດາທ່ານຜູ້ແທນ ແລະ ແຂກທີ່ຖືກເຊື້ອເຊີນມາຈາກພາກສ່ວນຕ່າງໆທີ່ໄດ້ເຊີດຊູຄວາມຮັບຜິດຊອບ ເຂົ້າຮ່ວມກອງປະຊຸມໃນມື້ນີ້. ຂອບໃຈນຳຄະນະຮັບຜິດຊອບກອງປະຊຸມ ທີ່ໄດ້ກະກຽມຈົນເຮັດໃຫ້ກອງປະຊຸມປະສົບຜົນສຳເລັດ ແລະ ຂອບໃຈມາຍັງພໍ່ແມ່ປະຊາຊົນບັນດາເຜົ່າ ທີ່ເປັນເຈົ້າການເອົາໃຈໃສ່ ແລະ ປະກອບສ່ວນຕໍ່ກອງປະຊຸມ.

ກອງປະຊຸມປ່ອນບັດຄັດເລືອກຄະນະອຳນວຍການປົກຄອງບ້ານຄັ້ງນີ້ໄດ້ສິ້ນສຸດລົງແລ້ວ ດ້ວຍຜົນສຳເລັດອັນຈົບງາມ, ແຕ່ພວກເຮົາຍັງມີໜ້າທີ່ອັນໜັກໜ່ວງໃນການຈັດຕັ້ງປະຕິບັດຜັນຂະຫຍາຍເນື້ອໃນຈິດໃຈຂອງກອງປະຊຸມຄັ້ງນີ້ໃຫ້ເລິກເຊິ່ງກວ້າງຂວາງ ແລະ ຫັນເຂົ້າສູ່ການຈັດຕັ້ງປະຕິບັດຕົວຈິງໃຫ້ເກີດດອກອອກຜົນ.

ທ້າຍສຸດນີ້, ຂໍອວຍພອນໃຫ້ບັນດາທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ປະສົບຜົນສຳເລັດໃນໜ້າທີ່ການງານຂອງຕົນ ທຸກປະການ ແລະ ຜາສຸກໃນຊີວິດ.

ໃນບັນຍາກາດທີ່ເຕັມໄປດ້ວຍຄວາມປິຕິຊົມຊື່ນ ຕໍ່ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ແລະ ໃນນາມປະທານກອງປະຊຸມ ຂ້າພະເຈົ້າຂໍປະກາດປິດກອງປະຊຸມຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.

**ຂໍຂອບໃຈ**

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ





## ກອງປະຊຸມ
## ປ່ອນບັດເລືອກຕັ້ງຄະນະອົງການປົກຄອງບ້ານ ຄັ້ງທີ.....
### ຄຳຂວັນຂອງບ້ານ